ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

05-08 ທັນວາ 2022
ປີທີ 11
ສະບັບທີ 897

ສຳນັກງານຕັ້ງຢູ່ອາລານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na


## ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX







## ບົດສູນທອນພິດ ກອງປະຊຸມສະໄໝສາມັນເທື່ອ 4

**ຮຽນ:** - ພະນະທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ ແຫ່ງ ສປປລາວ ທີ່ເຄົາລົບ ແລະນັບຖືຢ່າງສູງ!

- ບັນດາທ່ານຜູ້ນຳຂັ້ນສູງ, ອາດີດຜູ້ນຳຂັ້ນສູງຂອງພັກ-ລັດ ທີ່ນັບຖື!

- ບັນດາທ່ານສະມາຊິກສະພາແຫ່ງຊາດ, ແຂກທີ່ມີກຽດທີ່ນັບຖື ແລະ ຮັກແພງທັງຫລາຍ.

ປະຕິບັດຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ມາດຕາ 59 ກ່ຽວກັບກອງປະຊຸມສະໄໝສາມັນປະຈຳປີ ຂອງສະພາແຫ່ງຊາດ, ມື້ນີ້ ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການ ໃນທ່າມກາງບັນຍາກາດທີ່ທົ່ວພັກ-ລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດ ພວມສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມຄົບຄະນະ ຄັ້ງທີ 4 ແລະ 5 ຂອງຄະນະບໍລິຫານສູນກາງພັກ ສະໄໝທີ XI ກໍຄື ແຜນພັດທະນາເສດຖະກິດ-ສັງ

ອ່ານຕໍ່ໜ້າ 2

## 9 ເດືອນຜ່ານມາ ເສດຖະກິດແຫ່ງຊາດ ຂະຫຍາຍຕົວຢູ່ໃນລະດັບ 4,2%

(ສພຊ) ໃນວັນທີ 5 ທັນວາ 2022 ທ່ານ ພັນຄຳ ວິພາວັນ ນາຍົກລັດຖະມົນຕີ ແຫ່ງ ສປປລາວ ໄດ້ລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ກ່ຽວກັບການເຄື່ອນໄຫວວຽກງານພົ້ນເດັ່ນຂອງລັດຖະບານໃນ ປີ 2022 ແລະ ສະເໜີທິດທາງແຜນວຽກ ຈຸດສຸມໃນປີ 2023 ເຊິ່ງທ່ານໄດ້ກ່າວວ່າ:

ໃນໄລຍະ 11 ເດືອນຜ່ານມາ, ລັດຖະບານ ຊຸດທີ 9 ໄດ້ສືບຕໍ່ສຸມໃສ່ບັນຊາ-ຊີ້ນຳການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, 5 ວຽກງານຈຸດສຸມ ຂອງວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ



ແລະ 6 ວຽກຈຸດສຸມ ຂອງວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ທີ່ສະພາແຫ່ງຊາດໄດ້ຮັບຮອງ ເພື່ອສ້າງການຫັນປ່ຽນໃໝ່ໃຫ້ແຂງແຮງເລິກເຊິ່ງຮອບດ້ານ ຕາມມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກທີ່ກຳນົດໄວ້. ການປະຕິບັດແຜນດັ່ງກ່າວ ດຳເນີນໄປໃນເງື່ອນໄຂທີ່ສະພາບການສາກົນ, ພາກພື້ນ ແລະ ຢູ່ພາຍໃນປະເທດ ມີທັງຂໍ້ສະດວກ, ກາລະໂອກາດ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຫລາຍປະການ ສຳລັບສະພາບພາຍໃນປະເທດຂອງພວກເຮົາ ກໍໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ຢ່າງໜັກໜ່ວງບວກກັບຜົນກະທົບຈາກສະພາບການຂອງສາກົນ ແລະ ພາກພື້ນ ຍິ່ງສົ່ງຜົນກະທົບຕໍ່ລາວເຮົາຢ່າງຫລີກລ່ຽງບໍ່ໄດ້ ໂດຍສະເພາະແມ່ນເຮັດໃຫ້ລາຄານ້ຳມັນແພງຂຶ້ນ ທັງຕ້ອງຊອກຫາເງິນ

ອ່ານຕໍ່ໜ້າ 3

## ກອງປະຊຸມຄົບຄະນະກຳມາທິການແຜນການ, ການເງິນ ແລະ ການກວດສອບ ປະຈຳປີ 2022



(ສພຊ) ວັນທີ 30 ພະຈິກ 2022 ທີ່ເຮືອນຮັບແຂກກະຊວງແຮງງານນະຄອນຫລວງວຽງຈັນ, ກຳມາທິການແຜນການ, ການເງິນ ແລະ ການກວດສອບ ສະພາແຫ່ງຊາດ ໄດ້ຈັດກອງປະຊຸມຄົບຄະນະ ປະຈຳປີ 2022 ໂດຍການເປັນປະທານຂອງທ່ານ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ໂດຍການເຂົ້າຮ່ວມຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ມີບັນດາທ່ານປະທານ-ຮອງປະທານກຳ

ອ່ານຕໍ່ໜ້າ 7

## ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ

(ສພຊ) ໃນວັນທີ 5 ທັນວາ 2022 ທີ່ສະພາແຫ່ງຊາດ, ໃນໂອກາດເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX, ທ່ານ ຄຳເຈນ ວົງໂພສີ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 9 ເດືອນ ແລະ ຄາດຄະເນໝົດປີ 2022 ວ່າ: ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປີ 2022 ແມ່ນໄດ້ດຳເນີນໃນສະພາບການຂອງໂລກ ແລະ ພາກພື້ນ ສືບຕໍ່ຜັນແປຢ່າງສັບສົນ ໃນນີ້ລວມທັງສະພາບການລະບາດຂອງພະຍາດໂຄວິດ-19, ໄພພິບັດທາງທຳມະຊາດ, ຄວາມຂັດແຍ່ງດ້ານການເມືອງ ແລະ ເສດຖະກິດຂອງບາງປະເທດ, ເຊິ່ງໄດ້ເຮັດ



ໃຫ້ເສດຖະກິດໂລກ ມີຄວາມຫຍຸ້ງຍາກ ແລະ ຖົດຖອຍລົງຈາກລະດັບ 6,0% ປີ 2021 ລົງມາຢູ່ໃນລະດັບ 3,2% ຈາກສະພາບການດັ່ງກ່າວ, ເຖິງວ່າປະເທດພວກເຮົາຈະມີໂອກາດຫລາຍດ້ານແຕ່ກໍສືບຕໍ່ປະເຊີນກັບ

ອ່ານຕໍ່ໜ້າ 3



















ຊົມເຊີຍວັນຊາດ 2 ທັນວາ (02/12/1975-02/12/2022) ຄົບຮອບ 47 ປີ ຢ່າງສຸດໃຈ!

## ການດຳເນີນ...

(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການ ໃນຕອນເຊົ້າວັນຈັນທີ 5 ທັນວາ 2022 ທີ່ຫ້ອງປະຊຸມຂອງສະພາແຫ່ງຊາດ, ນະຄອນຫລວງວຽງຈັນ ໂດຍການເປັນປະທານກອງປະຊຸມຂອງພະນະທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແລະ ບັນດາທ່ານຮອງປະທານສະພາແຫ່ງຊາດ, ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ມີພະນະທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສປປລາວ; ພະນະທ່ານ ພັນຄຳ ວິພາວັນ ນາຍົກລັດຖະມົນຕີ ແຫ່ງ ສປປລາວ; ມີບັນດາທ່ານຜູ້ນຳຂັ້ນສູງ, ອາດີດຜູ້ນຳຂັ້ນສູງຂອງພັກ-ລັດ, ບັນດາທ່ານສະມາຊິກລັດຖະບານ, ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ຜູ້ຊົງຄຸນວຸດທິ, ສະຖາບັນການສຶກສາ, ຫົວໜ່ວຍທຸລະກິດ, ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ແຂກຖືກເຊີນເຂົ້າຮ່ວມ.

ໂດຍປະຕິບັດຕາມລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້ ຈະໄດ້ພິຈາລະນາຮັບຮອງບັນດາເນື້ອໃນທີ່ສຳຄັນ ດັ່ງນີ້:

1) ບົດລາຍງານການເຄື່ອນໄຫວວຽກງານພົ້ນເດັ່ນປະຈຳປີ 2022 ແລະ ທິດທາງແຜນການ ໃນປີ 2023 ຂອງລັດຖະບານ;

2) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023;

3) ບົດລາຍງານຂອງລັດຖະບານ ກ່ຽວກັບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປີ 2021; ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປີ 2022 ແລະ ແຜນງົບປະມານແຫ່ງລັດ ປີ 2023;

4) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023;

5) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023;

6) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023;

7) ບົດລາຍງານຂອງລັດຖະບານ ກ່ຽວກັບການສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ວຽກເຮັດງານທຳໃຫ້ປະຊາຊົນ ເພື່ອແກ້ໄຂບັນຫາການວ່າງງານ;

8) ບົດລາຍງານຂອງອົງການກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023; ບົດລາຍງານຜົນການກວດສອບບົດສະຫລຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021;

9) ບົດລາຍງານຂອງອົງການກວດກາແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023; ບົດລາຍງານຜົນການກວດກາ ຕາມຜົນການກວດສອບ ປີ 2020;

10) ບົດລາຍງານຂອງສານປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023;

11) ບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023;

12) ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍຈຳນວນ 12 ສະບັບ ໃນນີ້: ກົດໝາຍສ້າງໃໝ່ 3 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍໜັງສືຜ່ານແດນ; ຮ່າງກົດໝາຍວ່າດ້ວຍການທາງນ້ຳ; ຮ່າງກົດໝາຍວ່າດ້ວຍພິພິທະພັນ ແລະ ກົດໝາຍປັບປຸງ 9 ສະບັບ ຄື: ກົດໝາຍວ່າດ້ວຍທະນາຍຄວາມ; ກົດໝາຍວ່າດ້ວຍທະບຽນສານ; ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່; ກົດໝາຍວ່າດ້ວຍວິສາຫະກິດ; ກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ; ກົດໝາຍວ່າດ້ວຍອົງການໄອຍະການທະຫານ; ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ; ກົດໝາຍວ່າດ້ວຍການກວດສອບແຫ່ງລັດ ແລະ ກົດໝາຍວ່າດ້ວຍການກວດກາລັດ;

13) ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ຜົນການຕິດຕາມກວດກາຂອງສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ;

14) ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ ຂອງສະພາແຫ່ງຊາດ ຊຸດທີ IX ແຕ່ປີ 2023-2025.

ຕາມວາລະດຳເນີນກອງປະຊຸມ ໃນພາກເຊົ້າຂອງພິທີເປີດ ພາຍຫລັງການກ່າວສູນທອນພົດຂອງພະນະທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດແລ້ວ, ພະນະທ່ານ ພັນຄຳ ວິພາວັນ ໄດ້ລາຍງານກ່ຽວກັບການເຄື່ອນໄຫວວຽກງານພົ້ນເດັ່ນ ປະຈຳປີ 2022 ແລະ ທິດທາງແຜນການໃນປີ 2023 ຂອງລັດຖະບານ; ຈາກນັ້ນ, ທ່ານລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ໄດ້ລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023. ຫລັງຈາກນັ້ນ, ທ່ານລັດຖະມົນຕີກະຊວງການເງິນ ໄດ້ລາຍງານກ່ຽວກັບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປີ 2021; ການຈັດຕັ້ງປະຕິບັດງົບປະມານປີ 2022 ແລະ ທິດທາງແຜນງົບປະມານແຫ່ງລັດປີ 2023. ທ່ານຜູ້ວ່າການທະນາຄານແຫ່ງ ສປປລາວ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023; ຈາກນັ້ນ, ທ່ານ ສົມມາດ ພົລເສນາ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ປະກອບຄຳເຫັນຕໍ່ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນເງິນຕາປະຈຳປີ 2022 ແລະ ແຜນການປະຈຳປີ 2023; ບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດປີ 2021; ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ 2022 ແລະ ທິດທາງການສ້າງແຜນງົບປະມານແຫ່ງລັດປີ 2023.

ໄລຍະດຳເນີນກອງປະຊຸມສະພາແຫ່ງຊາດ ຍັງໄດ້ຈັດຕັ້ງໜ່ວຍງານຮັບຜິດຊອບໂທລະສັບສາຍດ່ວນ ເປີດຮັບເອົາຄຳຄິດຄຳເຫັນ ແລະ ຄຳສະເໜີໂດຍກົງຈາກທົ່ວສັງຄົມໃນໂມງລັດຖະການ ຜ່ານໂທລະສັບໝາຍເລກ 156 ໂດຍບໍ່ໄດ້ເສຍຄ່າ ແລະ ສື່ອີເມວ Nalao.156@gmail.com ແລະ ແອບປຣິແຄເຊິນ: App: na.

(ກົງໃຈ ແສງອຳພັນ)



## ບົດສູນທອນພົດ...

ຄົມແຫ່ງຊາດ 5 ປີ ຄັ້ງທີ IX ໂດຍສະເພາະສອງວາລະແຫ່ງຊາດ ພວມໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນຂະບວນຟົດຟື້ນແຂງແຮງ ແລະ ເປັນຮູບປະທຳຫລາຍຂຶ້ນ.

ໃນໂອກາດ ທີ່ມີຄວາມໝາຍສຳຄັນນີ້, ກອງປະຊຸມມີຄວາມພາກພູມໃຈ ແລະ ຄວາມປິຕິຍິນດີເປັນຢ່າງຍິ່ງ ທີ່ໄດ້ຕ້ອນຮັບພະນະທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສປປລາວ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມທີ່ມີຄວາມສຳຄັນຄັ້ງນີ້, ຂໍສະແດງຄວາມຂໍານັບຊົມເຊີຍຢ່າງສຸດອົກສຸດໃຈ.

ຂໍສະແດງຄວາມຂໍານັບຊົມເຊີຍ ບັນດາທ່ານຜູ້ນຳຂັ້ນສູງຂອງພັກ-ລັດ, ບັນດາທ່ານອາດີດການນຳຂັ້ນສູງຂອງພັກ-ລັດ, ບັນດາທ່ານສະມາຊິກລັດຖະບານ, ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ຜູ້ຊົງຄຸນວຸດທິ, ສະຖາບັນການສຶກສາ, ຫົວໜ່ວຍທຸລະກິດ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມຄັ້ງນີ້ ຢ່າງສຸດໃຈ.

ຂໍສະແດງຄວາມຊົມເຊີຍ ມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ ຊຸດທີ IX ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ໃນຂອບເຂດທົ່ວປະເທດ ທີ່ໄດ້ເຂົ້າຮ່ວມກອງປະຊຸມຄັ້ງນີ້.

ບັນດາທ່ານ ທີ່ນັບຖື ແລະ ຮັກແພງ!

ການເຄື່ອນໄຫວຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ໃນໄລຍະປີ 2022 ແມ່ນຢູ່ໃນສະພາບການຂອງພາກພື້ນ ແລະ ສາກົນ ທີ່ມີການຜັນແປໄປຢ່າງສະຫລັບຊັບຊ້ອນ, ເຄັ່ງຮ້ອນ ແລະ ມີຄວາມຫລໍ່ແຫລມຫລາຍດ້ານ ທີ່ຄາດຄະເນໄດ້ຍາກ ເຊິ່ງໄດ້ສົ່ງຜົນກະທົບໂດຍກົງຕໍ່ປະເທດຕ່າງໆໃນໂລກ ລວມທັງ ສປປລາວຂອງພວກເຮົາ ໂດຍສະເພາະຢ່າງຍິ່ງ ມີຜົນກະທົບຕໍ່ການແກ້ໄຂສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ພາຍໃນປະເທດຂອງພວກເຮົາ ທີ່ສະສົມມາເປັນເວລາຫລາຍປີ, ການຄຸ້ມຄອງລັດ ຕໍ່ເສດຖະກິດ-ສັງຄົມ ພົບຫລາຍສິ່ງທ້າທາຍໃໝ່ ເປັນຕົ້ນ ອັດຕາແລກປ່ຽນໜີງຕີງແຮງ, ລາຄານ້ຳມັນເຊື້ອໄຟ ແລະ ສິນຄ້າເພີ່ມສູງຂຶ້ນ, ຊີວິດການເປັນຢູ່ຂອງປະຊາຊົນມີຄວາມຝືດເຄືອງ. ແຕ່ດ້ວຍຄວາມເອົາໃຈໃສ່ນຳພາ-ຊີ້ນຳ ຂອງຄະນະບໍລິຫານງານສູນກາງພັກ, ການປະສານສົມທົບ, ການປຶກສາຫາລືຮ່ວມກັນ ຢ່າງໃກ້ຊິດ ລະຫວ່າງ ສະພາແຫ່ງຊາດ ແລະ ລັດຖະບານ, ຄວາມເຂົ້າໃຈ ແລະ ເປັນເອກະພາບນຳພັກ-ລັດ ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ ກໍຄືປະຊາຊົນບັນດາເຜົ່າ ເຮັດໃຫ້ບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ຂອງປະເທດເຮົາ ໄດ້ຮັບການແກ້ໄຂໃຫ້ເບົາບາງລົງເປັນກ້າວໆ; ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມປະຈຳປີ ມີຄາດໝາຍຈຳນວນໜຶ່ງບັນລຸໄດ້ຕາມແຜນການ ແລະ ລື່ນຄາດໝາຍ, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດໝົດປີ ສາມາດບັນລຸໄດ້ເກີນແຜນກຳນົດຈຳນວນໜຶ່ງ, ເຮັດໃຫ້ປະເທດຊາດ ຍັງສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ, ສາມາດປະຄັບປະຄອງເສດຖະກິດ ບໍ່ໃຫ້ຕົກໃນສະພາບຫຍຸ້ງຍາກກວ່ານີ້ ແລະ ຮັບປະກັນໃຫ້ສືບຕໍ່ມີການຂະຫຍາຍຕົວ, ແນທາງການຕ່າງປະເທດຂອງພັກ ໄດ້ຮັບການຈັດຕັ້ງຜັນຂະຫຍາຍຢ່າງເລິກເຊິ່ງ ແລະ ກວ້າງຂວາງ ເຊິ່ງເຮັດໃຫ້ບົດບາດອິດທິພົນຂອງປະເທດພວກເຮົາ ໄດ້ຮັບການຍົກສູງຢ່າງຕໍ່ເນື່ອງໃນເວທີພາກພື້ນ ແລະ ສາກົນ.

ບັນດາທ່ານຜູ້ນຳພັກ-ລັດ, ສະມາຊິກສະພາແຫ່ງຊາດ, ແຂກທີ່ນັບຖື ແລະ ຮັກແພງ!

ປະຕິບັດຕາມລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້ ຈະໄດ້ພິຈາລະນາຮັບຮອງບັນດາເນື້ອໃນທີ່ສຳຄັນ ດັ່ງນີ້:

1) ບົດລາຍງານການເຄື່ອນໄຫວວຽກງານພົ້ນເດັ່ນປະຈຳປີ 2022 ແລະ ທິດທາງແຜນການ ໃນປີ 2023 ຂອງລັດຖະບານ.

2) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023.

3) ບົດລາຍງານຂອງລັດຖະບານ ກ່ຽວກັບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປີ 2021; ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປີ 2022 ແລະ ແຜນງົບປະມານແຫ່ງລັດ ປີ 2023;

4) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023.

5) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023.

6) ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023.

7) ບົດລາຍງານຂອງລັດຖະບານ ກ່ຽວກັບການສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ວຽກເຮັດງານທຳໃຫ້ປະຊາຊົນ ເພື່ອແກ້ໄຂບັນຫາການວ່າງງານ.

8) ບົດລາຍງານຂອງອົງການກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023; ບົດລາຍງານຜົນການກວດສອບບົດສະຫລຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2021.

9) ບົດລາຍງານຂອງອົງການກວດກາແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023; ບົດລາຍງານຜົນການກວດກາ ຕາມຜົນການກວດສອບ ປີ 2020.

10) ບົດລາຍງານຂອງສານປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023.

11) ບົດລາຍງານຂອງອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023.

12) ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍຈຳນວນ 12 ສະບັບ ໃນນີ້: ກົດໝາຍສ້າງໃໝ່ 3 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍໜັງສືຜ່ານແດນ; ຮ່າງກົດໝາຍວ່າດ້ວຍການທາງນ້ຳ; ຮ່າງກົດໝາຍວ່າດ້ວຍຫໍພິພິທະພັນ ແລະ ກົດໝາຍປັບປຸງ 9 ສະບັບ ຄື: ກົດໝາຍວ່າດ້ວຍທະນາຍຄວາມ; ກົດໝາຍວ່າດ້ວຍທະບຽນສານ; ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່; ກົດໝາຍວ່າດ້ວຍວິສາຫະກິດ; ກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ; ກົດໝາຍວ່າດ້ວຍອົງການໄອຍະການທະຫານ; ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ; ກົດໝາຍວ່າດ້ວຍການກວດສອບແຫ່ງລັດ ແລະ ກົດໝາຍວ່າດ້ວຍການກວດກາລັດ.

13) ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ຜົນການຕິດຕາມກວດກາຂອງສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ.

14) ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ ຂອງສະພາແຫ່ງຊາດ ຊຸດທີ IX ແຕ່ປີ 2023-2025.

ນອກນັ້ນ, ຍັງຈະໄດ້ຮັບຟັງການຊີ້ແຈງຂອງພາກສ່ວນກ່ຽວຂ້ອງຈຳນວນໜຶ່ງ ຕໍ່ຄຳຊັກຖາມຂອງບັນດາສະມາຊິກສະພາແຫ່ງຊາດ.

ບັນດາທ່ານທີ່ນັບຖື ແລະ ຮັກແພງ!

ເພື່ອພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ທີ່ມີຈຳນວນຫລາຍຄືດັ່ງກ່າວນີ້ ໃຫ້ມີຄຸນນະພາບ, ປະສິດທິຜົນ ແລະ ບັນລຸຜົນຕາມແຜນການທີ່ວາງໄວ້, ໃນນາມປະທານກອງປະຊຸມ ຂ້າພະເຈົ້າ ຂໍຮຽກຮ້ອງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງສືບຕໍ່ໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນຕໍ່ບັນດາເນື້ອໃນທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງໃນກອງປະຊຸມຄັ້ງນີ້, ຮຽກຮ້ອງມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ ຈົ່ງໄດ້ນຳໃຊ້ສິດປະຊາທິປະໄຕ ແລະ ເຊີດຊູຄວາມຮັບຜິດຊອບການເມືອງຂອງຕົນ ໃນການຄົ້ນຄວ້າ, ປະກອບຄຳເຫັນ ຕໍ່ທຸກບັນຫາຢ່າງຖີ່ຖ້ວນ, ສ້າງສັນ, ພາວະວິໄສ ແລະ ເລິກເຊິ່ງ ບົນພື້ນຖານແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ສະພາບຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມຂອງປະເທດເຮົາໃນປັດຈຸບັນ ເພື່ອເຮັດໃຫ້ເນື້ອໃນທີ່ນຳມາພິຈາລະນາ, ຮັບຮອງຄັ້ງນີ້ມີຄຸນນະພາບ ແລະ ສາມາດນຳໄປຈັດຕັ້ງປະຕິບັດຢ່າງເປັນຮູບປະທຳຢ່າງແທ້ຈິງ.

ໃນໂອກາດອັນສະຫງ່າລາສີນີ້, ໃນນາມປະທານກອງປະຊຸມ, ຂ້າພະເຈົ້າ ຂໍປະກາດໄຂກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງເປັນທາງການ ນັບແຕ່ເວລານີ້ເປັນຕົ້ນໄປ.

## 9 ເດືອນ...

ຕາຕ່າງປະເທດເພື່ອນຳເຂົ້ານ້ຳມັນຫລາຍຂຶ້ນກວ່າເກົ່າທົບເທົ່າຕົວ ເຊິ່ງເຮັດໃຫ້ພວກເຮົາເກີດສະພາບຂາດເງິນຕາ ແລະ ເປັນຜົນພວງໃຫ້ເງິນກີບອ່ອນຄ່າບວກກັບການປັບອັດຕາດອກເບ້ຍພື້ນຖານເພີ່ມຂຶ້ນຂອງທະນາຄານກາງຂອງສະຫະລັດອາເມລິກາ ຍິ່ງຊ້ຳເຕີມຕື່ມໄປອີກ, ທັງໝົດນີ້ໄດ້ສົ່ງຜົນກະທົບຕໍ່ໄພເງິນເຟີ້ຂອງລາວເພີ່ມຂຶ້ນສູງ ເພາະປະເທດເຮົາມີພື້ນຖານເສດຖະກິດທີ່ອ່ອນນ້ອຍ, ບອບບາງ ແລະ ເປັນປະເທດນຳເຂົ້ານ້ຳມັນເຊື້ອໄຟສຳເລັດຮູບ 100%. ນອກຈາກນັ້ນ, ບາງແຂວງພາກເໜືອ ແລະ ພາກໃຕ້ ຍັງຖືກຜົນກະທົບຢ່າງໜັກໜ່ວງຈາກຝົນຕົກໜັກ. ເຖິງແມ່ນວ່າສະພາບສາກົນ, ພາກພື້ນ ແລະ ພາຍໃນ ຈະມີຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫລາຍປະການ ແບບບໍ່ເຄີຍມີໃນຮອບຫລາຍປີຜ່ານມາກໍ່ຕາມ ແຕ່ພາຍໃຕ້ການນຳພາ-ຊີ້ນຳຢ່າງໃກ້ສິດ ຂອງຄະນະບໍລິຫານງານສູນກາງພັກ, ກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ ກໍຄືການຕິດຕາມກວດກາເປັນປົກກະຕິຂອງ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ການຮ່ວມມືຊ່ວຍເຫລືອຂອງບັນດາປະເທດເພື່ອນມິດບວກໃສ່ກັບຄວາມພະຍາຍາມຢ່າງຕັ້ງໜ້າຂອງລັດຖະບານ ໃນການແກ້ບັນຫາລວມຂອງຊາດ ຈຶ່ງເຮັດໃຫ້ພວກເຮົາສາມາດປະຄັບປະຄອງເສດຖະກິດຂອງຊາດ ບໍ່ໃຫ້ຕົກເຂົ້າສູ່ວິກິດທີ່ໜັກໜ່ວງ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍໄດ້ໂດຍພື້ນຖານ ແລະ ໄດ້ມີໝາກຜົນສຳເລັດຈຳນວນໜຶ່ງ ດັ່ງນີ້:

1) ການຂະຫຍາຍຕົວດ້ານເສດຖະກິດ: ໄດ້ຊຸກຍູ້ໃຫ້ບັນດາຫົວໜ່ວຍການຜະລິດກະສິກຳ, ອຸດສາຫະກຳ ແລະບໍລິການທີ່ເປັນທ່າແຮງ ຂັບເຄື່ອນການຂະຫຍາຍຕົວຂອງເສດຖະກິດ ໃຫ້ດີຂຶ້ນ, ອີງໃສ່ການຄິດໄລ່ GDP ໃນໄລຍະ 9 ເດືອນຜ່ານມາ ເຫັນວ່າເສດຖະກິດແຫ່ງຊາດຂະຫຍາຍຕົວຢູ່ໃນລະດັບ 4,2% ແລະ ຄາດວ່າໝົດປີຈະສູ້ຊົນໃຫ້ຂະຫຍາຍ ຕົວໄດ້ໃນລະດັບ 4,4% (ຕາມແຜນ 4,5%) ເຖິງແມ່ນວ່າຈະບໍ່ບັນລຸຕາມແຜນ ແຕ່ກໍມີທ່າອ່ຽງຂະຫຍາຍຕົວທີ່ດີຂຶ້ນ ໃນສະພາບແວດລ້ອມທີ່ຫຍຸ້ງຍາກ ແລະ ທ້າທາຍໃນປັດຈຸບັນ.

2) ການເກັບລາຍຮັບງົບປະມານ: ໄດ້ເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫລຂອງລາຍຮັບງົບປະມານແຫ່ງລັດ, ດ້ວຍການສຸມໃສ່ການຫັນການເກັບລາຍຮັບເປັນທັນສະໄໝ ແລະ ອອກນິຕິກຳລຸ່ມກົດໝາຍຈຳນວນໜຶ່ງ; ສຸມໃສ່ສ້າງຖານອາກອນມູນຄ່າເພີ້ມໄດ້ 9.391 ຫົວໜ່ວຍ ໃນຈຳນວນທັງໝົດ 10.500 ຫົວໜ່ວຍໃນຂອບເຂດທົ່ວປະເທດ ກວມເອົາ 89,43%; ສືບຕໍ່ສ້າງຖານລາຍຮັບໃໝ່ຈຳນວນໜຶ່ງ ໃນຂົງເຂດຕ່າງໆເຊັ່ນ: ການຜະລິດ ແລະ ສົ່ງອອກສິນຄ້າກະສິກຳ, ການເຮັດທົດລອງແຮ່ທາດ, ການແກ້ໄຂພາຫະນະທີ່ເຂົ້າບໍ່ຖືກຕ້ອງ, ການທົດລອງປະຕິບັດໂຄງການຂຸດຄົ້ນ Bitcoin, ປັບປຸງການຂົນສົ່ງທາງລົດໄຟ ແລະ ເປີດປະເທດຮັບເອົານັກທ່ອງທ່ຽວ ແລະ ອື່ນໆ. ສະນັ້ນ, ຈຶ່ງເຮັດໃຫ້ການເກັບລາຍຮັບງົບປະມານ ມາຮອດວັນທີ 22 ພະຈິກ 2022 ບັນລຸໄດ້ 27.589 ຕື້ກີບ ຫລື ປະມານ 87,33% ຂອງແຜນການປີ ທຽບກັບເດືອນພະຈິກ 2021 ເພີ່ມຂຶ້ນ 33% ຫລື ເປັນເງິນທຽບເທົ່າ 6.783 ຕື້ກີບ, ໃນນັ້ນ ພົ້ນເດັ່ນແມ່ນລາຍຮັບພາຍໃນສາມາດບັນລຸໄດ້ 25.832 ຕື້ກີບ, ເທົ່າກັບ 89,19% ຂອງແຜນການປີ ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 37 % ຫລື ເພີ່ມຂຶ້ນ ເປັນເງິນທຽບເທົ່າ 6.957 ຕື້ກີບ, ຄາດຄະເນລາຍຮັບໝົດປີ 2022 ຈະປະຕິບັດໄດ້ປະມານ 32.447 ຕື້ກີບ ເທົ່າກັບ 102,70% ຫລື ຖ້າບຸກບືນຢ່າງແຂງແຮງຈະບັນລຸໄດ້ປະມານ 33.574 ຕື້ ເທົ່າກັບ 106,27% ຂອງແຜນການປີ (ຈະເປັນປີທີ 2 ຕິດຕໍ່ກັນທີ່ສາມາດເກັບລາຍຮັບໄດ້ເກີນແຜນ).

3) ການປະຕິບັດລາຍຈ່າຍງົບປະມານ: ລັດຖະບານ ປະຕິບັດລາຍຈ່າຍງົບປະມານບົນຈິດໃຈປະຢັດຕາມດຳລັດວ່າດ້ວຍການປະຢັດ ແລະ ຕ້ານການຟຸມເຟືອຍ ກໍຄືດຳລັດວ່າດ້ວຍລົດຂອງລັດ ຢ່າງເປັນເຈົ້າການ. ພ້ອມນັ້ນ, ຍັງສາມາດປະຕິບັດລາຍຈ່າຍງົບປະມານໄປຕາມແຜນການ ແລະ ຮັບປະກັນການເບີກຈ່າຍທີ່ຈຳເປັນໄດ້ຕາມປົກກະຕິ ເປັນຕົ້ນ:ເງິນເດືອນ, ເງິນນະໂຍບາຍ, ການຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດ ແລະ ອື່ນໆ. ລາຍຈ່າຍງົບປະມານ ມາຮອດວັນທີ 22 ພະຈິກ ປີ 2022 ສາມາດບັນລຸໄດ້ 23.752 ຕື້ກີບ ເທົ່າກັບ 67,07% ຂອງແຜນການປີ, ຄາດຄະເນ ໝົດປີບັນລຸໄດ້ 34.553 ຕື້ກີບ ເທົ່າກັບ 99,60% ຂອງແຜນການປີ, ເນື່ອງລັດຖະບານ ສາມາດປະຢັດລາຍຈ່າຍຈຳນວນໜຶ່ງທີ່ບໍ່ຈຳເປັນອອກ ເຮັດໃຫ້ມູນຄ່າການຂາດດຸນງົບປະມານຫລຸດລົງ ທຽບໃສ່ແຜນການທີ່ສະພາແຫ່ງຊາດຮັບຮອງເອົາ.

4) ການແກ້ໄຂໜີ້ສິນ: ລັດຖະບານ ໄດ້ສືບຕໍ່ຄຸ້ມຄອງ ແລະ ແກ້ໄຂບັນຫາໜີ້ສິນ ໄປຕາມຂອບແຜນທີ່ໄດ້ກຳນົດໄວ້ ແລະ ສາມາດປະຄັບປະຄອງໃນການຊຳລະໜີ້ສິນໄດ້ ໂດຍສາມາດເຮັດໃຫ້ປະເທດເຮົາ ບໍ່ໃຫ້ຕົກເປັນປະເທດທີ່ຊຳລະໜີ້ສິນບໍ່ໄດ້. ພ້ອມນັ້ນ, ການແກ້ໄຂໜີ້ສິນໂຄງການລົງທຶນລັດ ດ້ວຍການອອກພັນທະບັດລັດຖະບານ ສາມາດປະຕິບັດໄດ້ 5.197 ຕື້ກີບ ເທົ່າກັບ 51,54% ຂອງແຜນການປີ (ແຜນການປີ ແມ່ນ 10.083 ຕື້ກີບ).

5) ການຮັກສາສະຖຽນລະພາບດ້ານເງິນຕາ: ລັດຖະບານ ໄດ້ສຸມໃສ່ແກ້ໄຂບັນຫາການເໜັງຕີງຂອງອັດຕາແລກປ່ຽນເງິນຕາຕ່າງປະເທດ ແລະ ອັດຕາເງິນເຟີ້ ເພື່ອປະຄັບປະຄອງການເໜັງຕີງດັ່ງກ່າວໃຫ້ສະລໍຕົວໃນຈັງຫວະທີ່ຊ້າລົງ. ໃນນີ້, ໄດ້ສຸມໃສ່ຄຸ້ມຄອງບັນດາຮ້ານແລກປ່ຽນ ໃຫ້ເຂົ້າສູ່ການຄຸ້ມຄອງຂອງທະນາຄານທຸລະກິດ ເຊິ່ງສາມາດດັດສົມຮ້ານແລກປ່ຽນຈາກໃນເມື່ອກ່ອນ ມີຈຳນວນ 500 ກວ່າຮ້ານ ມາຮອດປັດຈຸບັນເຫລືອຈຳນວນ 113 ຮ້ານ ແລະ ໃນຕໍ່ໜ້າຍັງຈະສືບຕໍ່ດັດສົມຈົນກ້າວໄປເຖິງບໍ່ມີຮ້ານແລກປ່ຽນເງິນຕາເອກະເທດ ໂດຍຫັນເປັນປ່ອງບໍລິການຂອງທະນາຄານຄືກັບປະເທດອື່ນໆ; ພ້ອມນັ້ນ, ກໍໄດ້ຄຸມເຂັ້ມການໂອນເງິນຊື້-ຂາຍສິນຄ້າ ແລະ ເງິນທີ່ນຳເຂົ້າມາລົງທຶນຕ້ອງຜ່ານລະບົບທະນາຄານ, ໄດ້ແກ້ໄຂການສະໜອງເງິນຕາຕ່າງປະເທດໃຫ້ແກ່ບໍລິສັດທີ່ນຳເຂົ້ານ້ຳມັນເຊື້ອໄຟທີ່ເປັນຫລັກແຫລ່ງ ເຊິ່ງສາມາດສະໜອງນ້ຳມັນເຊື້ອໄຟໃຫ້ສັງຄົມໄດ້ປົກກະຕິ (ເຖິງລາຄາແພງແດ່ ກໍຂຶ້ນຢູ່ກັບຕະຫລາດສາກົນ).

6) ການປະຕິຮູບລັດວິສາຫະກິດ: ລັດຖະບານ ໄດ້ອອກເປັນມະຕິໃນການແບ່ງຄວາມຮັບຜິດຊອບໃນການປັບປຸງລັດວິສາຫະກິດ ທັງໄດ້ກຳນົດບັນຊີລັດວິສາຫະກິດທີ່ຈະປັບປຸງຢ່າງລະອຽດ, ການປັບປຸງ ແມ່ນສຸມໃສ່ປັບປຸງປະສິດທິຜົນຂອງການບໍລິຫານ, ປັບໂຄງສ້າງໜີ້ສິນຂອງລັດວິສາຫະກິດ ແລະ ປັບປຸງໂຄງສ້າງການຖືຮຸ້ນ ເພື່ອໃຫ້ການບໍລິຫານຈັດການເປັນມືອາຊີບ ແລະ ມີຄວາມໂປ່ງໃສ ມີປະສິດຕິຜົນທາງເສດຖະກິດ, ຜ່ານການປັບປຸງ ເຫັນວ່າການເຄື່ອນໄຫວທຸລະກິດຂອງລັດວິສາຫະກິດຈຳນວນໜຶ່ງມີທ່າອ່ຽງທີ່ດີຂຶ້ນ ສົມທຽບໃນໄລຍະຜ່ານມາ ຕົວຢ່າງ: ຂົງເຂດທະນາຄານທຸລະກິດ ໃນເມື່ອກ່ອນແມ່ນເກີດສະພາບການຫລຸບທຶນ ແລະ ສ້າງໜີ້ທີ່ບໍ່ເກີດດອກອອກຜົນເປັນຈຳນວນມະຫາສານ, ມາຮອດປັດຈຸບັນເລີ່ມມີກຳໄລ ແລະ ມອບພັນທະໃຫ້ລັດໄດ້ຕາມເປົ້າໝາຍ.

7) ການສົ່ງເສີມການລົງທຶນຂອງພາກເອກະຊົນ: ໄດ້ສືບຕໍ່ປັບປຸງກົນໄກອຳນວຍຄວາມສະດວກ ແລະ ສົ່ງເສີມການລົງທຶນ ຕາມນະໂຍບາຍ ແລະ ຄຳສັ່ງຂອງລັດຖະບານ ເປັນຕົ້ນການຄົ້ນຄວ້າປັບປຸງບັນດານິຕິກຳຕ່າງໆທີ່ກ່ຽວຂ້ອງກັບຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ແລະ ຂັ້ນແຂວງ; ໄດ້ເອົາໃຈໃສ່ຊຸກຍູ້ບັນດາໂຄງ ການລົງທຶນກໍ່ສ້າງພື້ນຖານໂຄງລ່າງຂະໜາດໃຫຍ່ ເຊິ່ງໄດ້ມີຄວາມຄືບໜ້າຕາມແຜນການທີ່ກຳນົດໄວ້.

8) ດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການພົວພັນສາກົນ: ໄດ້ສຸມໃສ່ວຽກງານ ປກສ-ປກຊ ທົ່ວປວງຊົນຮອບດ້ານ ອັນໄດ້ເຮັດໃຫ້ປະເທດຊາດພວກເຮົາສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ກໍມີບາດກ້າວທີ່ດີຂຶ້ນ ໂດຍສະເພາະສາມາດມ້າງຄະດີແລະ ຈັບກຸມຜູ້ຄ້າລາຍໃຫຍ່, ຜູ້ເສບຢາເສບຕິດໄດ້ຫລາຍກໍລະນີ. ພ້ອມນັ້ນ, ໄດ້ເສີມຂະຫຍາຍການພົວພັນຮ່ວມມືກັບຕ່າງປະເທດ ແລະ ປະເທດເພື່ອນມິດຍຸດທະສາດ ແລະ ພິເສດແມ່ນປະເທດໃກ້ຄຽງ ດ້ວຍຫລາຍຮູບແບບ ລວມທັງເຂົ້າຮ່ວມກອງປະຊຸມລະດັບສາກົນ ແລະ ພາກພື້ນ ແລະ ການຍາດແຍ່ງການຮ່ວມມືຊ່ວຍເຫລືອຈາກສາກົນ ເຊິ່ງໄດ້ເຮັດໃຫ້ຖານະບົດບາດຂອງປະເທດເຮົາຕໍ່ເວທີສາກົນ ແລະ ພາກພື້ນ ພົ້ນເດັ່ນຂຶ້ນ ແລະ ສ້າງໄດ້ຄວາມໝັ້ນຄົງທາງດ້ານການເມືອງ ແລະ ຄວາມປອດໄພ ຕໍ່ປະເທດຂອງພວກເຮົາ.

ອ່ານຕໍ່ສະບັບໜ້າ...

## ລັດຖະມົນຕີ...

ຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍໃນຫລາຍດ້ານເຊັ່ນກັນ, ໃນນີ້ອັນທີ່ມີລັກສະນະສະເພາະຂອງປະເທດພວກເຮົາແມ່ນຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ທີ່ສະສົມມາຫລາຍປີ. ເຖິງຢ່າງໃດກໍ່ຕາມ ດ້ວຍການຊີ້ນຳຂອງສູນກາງພັກທີ່ແທດເຖິງຕົວຈິງ ແລະ ມີຄວາມພະຍາຍາມຢ່າງຕັ້ງໜ້າຂອງທຸກພາກສ່ວນໃນການຈັດຕັ້ງລະບົບການເມືອງປະຊາທິປະໄຕທຸກຂັ້ນ, ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໄລຍະ 9 ເດືອນ ແລະ ຄາດຄະເນໝົດປີ 2022 ສາມາດດຳເນີນໄດ້ໃນລະດັບດີພໍສົມຄວນ ເຊິ່ງລາຍລະອຽດມີດັ່ງນີ້:

1. ເປົ້າໝາຍການພັດທະນາເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບ, ໝັ້ນທ່ຽງ ແລະ ຍືນຍົງ

1.1. ການຂະຫຍາຍຕົວດ້ານເສດຖະກິດ (ມີທັງໝົດ 29 ຕົວຊີ້ບອກ, ຄາດວ່າຈະສາມາດບັນລຸໄດ້ຕາມແຜນ ມີ 22 ຕົວຊີ້ບອກ): ໄລຍະ 9 ເດືອນ GDP ບັນລຸໄດ້ 4,2% ແລະ ໝົດປີຄາດວ່າຈະສາມາດບັນລຸໄດ້ 4,4% (ແຜນການ 4,5%). ໃນນີ້, ຂະແໜງກະສິກຳ ຂະຫຍາຍຕົວ 2,9% ກວມເອົາ 17,5% ຂອງ GDP, ອຸດສາຫະກຳ ຂະຫຍາຍຕົວ 4,4% ກວມເອົາ 34,1% ຂອງ GDP, ການບໍລິການ ຂະຫຍາຍຕົວ 4,9% ກວມເອົາ 37,1% ຂອງ GDP ແລະ ພາສີອາກອນ ຂະຫຍາຍຕົວ 4,2% ກວມເອົາ 11,3% ຂອງ GDP, GDI ຕໍ່ຫົວຄົນ ບັນລຸໄດ້ 1.841 ໂດລາ(ແຜນການ: 2,503 ໂດລາ), GNI ຕໍ່ຫົວຄົນ ບັນລຸໄດ້ 1.729 ໂດລາ (ແຜນການ: 2,358 ໂດລາ), ຂະແໜງການທີ່ປະກອບສ່ວນສຳຄັນຕໍ່ການຂະຫຍາຍຕົວຂອງ GDI ແມ່ນການຜະລິດກະສິກຳ, ການກໍ່ສ້າງ ແລະ ການບໍລິການຂາຍຍົກ-ຂາຍຍ່ອຍ, ການບໍລິການທີ່ຕິດພັນກັບການທ່ອງທ່ຽວ ແລະ ການຂົນສົ່ງ. ອັນພົ້ນເດັ່ນນັບແຕ່ເປີດປະເທດຕົ້ນເດືອນພຶດສະພາເປັນຕົ້ນມາ ໄດ້ມີນັກທ່ອງທ່ຽວຕ່າງປະເທດເຂົ້າມາທ່ອງທ່ຽວເພີ່ມຂຶ້ນຢູ່ໃນລະດັບ 644,756 ຄົນ ເຊິ່ງເຮັດໃຫ້ຂະແໜງການບໍລິການຕິດພັນກັບການທ່ອງທ່ຽວ ແລະ ການຂົນສົ່ງ ຂະຫຍາຍຕົວດີຂຶ້ນ (7-8%).

1.2. ການຄຸ້ມຄອງເສດຖະກິດມະຫາພາກ

1). ດ້ານງົບປະມານ (ມີ 6 ຕົວຊີ້ບອກ ແລະ ຄາດວ່າຈະສາມາດບັນລຸໄດ້ 4 ຕົວຊີ້ບອກ): ສິ່ງທີ່ພົ້ນເດັ່ນແມ່ນພາກສ່ວນຕ່າງໆ ໄດ້ມີຄວາມພະຍາຍາມປະຕິບັດຄຳສັ່ງເລກທີ 18/ນຍ ຢ່າງຕັ້ງໜ້າ ເຊິ່ງໃນໄລຍະ 9 ເດືອນ ສາມາດເກັບລາຍຮັບງົບປະມານໄດ້ 24.240 ຕື້ກີບ ເທົ່າກັບ 76,72% ຂອງແຜນການ, ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 49,45%, ສຳລັບຕົວເລກໄລຍະ 11 ເດືອນ ລາຍຮັບປະຕິບັດໄດ້ 28.455 ຕື້ກີບ ເທົ່າກັບ 90,06% ຂອງແຜນການ, ໃນນີ້ລາຍຮັບພາຍໃນປະຕິບັດໄດ້ 26.655 ຕື້ກີບ ເທົ່າກັບ 92,03% ຂອງແຜນການ, ທຽບໃສ່ປີຜ່ານມາເພີ່ມຂຶ້ນ 29% ຫລື ເປັນເງິນເທົ່າກັບ 5.980 ຕື້ກີບ ແລະ ຄາດວ່າໝົດປີຈະປະຕິບັດໄດ້ 32,447 ຕື້ກີບ ເທົ່າກັບ 102,7% ຂອງແຜນການ. ດ້ານລາຍຈ່າຍງົບປະມານໄລຍະ 9 ເດືອນ ປະຕິບັດໄດ້ 20,773 ຕື້ກີບ, ເທົ່າກັບ 59,88% ຂອງແຜນການ, ສຳລັບຕົວເລກ ໄລຍະ 1 ເດືອນ ປະຕິບັດໄດ້ 25,694 ຕື້ກີບ ເທົ່າກັບ 72,56% ຂອງແຜນການ ແລະ ຄາດວ່າໝົດປີຈະບໍ່ໃຫ້ເກີນ 3,4,553 ຕື້ກີບ ເທົ່າກັບ 9,60% ຂອງແຜນການ. ການຂາດດຸນງົບປະມານໝົດປີ ຄາດວ່າຈະຢູ່ໃນລະດັບ 2.106 ຕື້ກີບ ຫລື ເທົ່າກັບ 0,99% ຂອງ GDP ຕ່ຳກວ່າລະດັບທີ່ສະພາແຫ່ງຊາດກຳນົດໄວ້.

2). ດ້ານເງິນຕາ (ມີ 7 ຕົວຊີ້ບອກ, ຄາດວ່າຈະສາມາດບັນລຸແຜນ ມີ 4 ຕົວຊີ້ບອກ): ສິ່ງທີ່ພົ້ນເດັ່ນແມ່ນໄດ້ຄຸ້ມຄອງເງິນຕາດ້ວຍມາດຕະການຕ່າງໆຢ່າງເຂັ້ມງວດກວ່າເກົ່າ, ໃນນີ້ລວມທັງການປັບປຸງນິຕິກຳທີ່ກ່ຽວຂ້ອງ, ການອອກພັນທະບັດ ທຫລ, ການດັດສົມຮ້ານແລກປ່ຽນເງິນຕາ ແລະ ອື່ນໆ ເຊິ່ງມາຮອດທ້າຍເດືອນກັນຍາ ປະລິມານເງິນ M2 ເພີ່ມຂຶ້ນ 39,69% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ (ແຜນການ: ບໍ່ເກີນ 22%); ອັດຕາແລກປ່ຽນສະເລ່ຍ 9 ເດືອນຕົ້ນປີ 2022 ເງິນກີບທຽບເງິນໂດລາ ອ່ອນຄ່າ 19,44% (ແຜນການ: ±5%); ຄັງສຳຮອງເງິນຕາຕ່າງປະເທດ ສາມາດກຸ້ມການນຳເຂົ້າໄດ້ 3,01 ເດືອນ (ແຜນການ: ບໍ່ຫລຸດ 3 ເດືອນ); ເງິນຝາກຂອງທະນາຄານທຸລະກິດສືບຕໍ່ເພີ່ມຂຶ້ນເຮັດໃຫ້ຍອດເຫລືອເງິນຝາກຂອງທະນາຄານທຸລະກິດ ກວມເອົາ 86,72% ຂອງ GDP (ແຜນການ: ກວມເອົາ 70% ຂອງ GDP ໃນທ້າຍປີ 2022); ສິນເຊື່ອຂະຫຍາຍຕົວໃນຈັງຫວະດີກວ່າປີຜ່ານມາເຮັດໃຫ້ຍອດເຫລືອສິນເຊື່ອຂອງຂະແໜງການທະນາຄານ ກວມເອົາ 60,58% ຂອງ GDP (ແຜນການ: ກວມເອົາ 50% ຂອງ GDP ໃນທ້າຍປີ 2022), ອັດຕາສ່ວນໜີ້ບໍ່ເກີດດອກອອກຜົນຂອງທະນາຄານທຸລະກິດ (NPLs) ຢູ່ໃນລະດັບ 2,13% (ແຜນການ: ບໍ່ເກີນ 3%). ເນື່ອງຈາກລາຄານ້ຳມັນເຊື້ອໄຟເພີ່ມຂຶ້ນສູງຢ່າງກ້າວກະໂດດ ແລະ ການອ່ອນຄ່າຂອງເງິນກີບເຮັດໃຫ້ອັດຕາເງິນເຟີ້ມີການເໜັງຕີງເພີ່ມຂຶ້ນຕາມທ່າອ່ຽງລວມຂອງໂລກ ເຊິ່ງເພີ່ມຈາກລະດັບ 6,3% ໃນເດືອນມັງກອນ ປີ 2022 ເປັນ 34% ໃນເດືອນກັນຍາ ແລະ 38,46% ໃນເດືອນພະຈິກ 2022, ສະເລ່ຍ 9 ເດືອນ ໃນລະດັບ 17,73% (ແຜນການ: ສະເລ່ຍໝົດປີບໍ່ເກີນ 5%). ໃນສະພາບດັ່ງກ່າວ ລັດຖະບານໄດ້ພະຍາຍາມແກ້ໄຂດ້ວຍຫລາຍມາດຕະການທີ່ສອດຄ່ອງ ແລະ ສາມາດຄຸ້ມຄອງເງິນຕາໄດ້ໃນລະດັບປະຄັບປະຄອງ.

3). ດຸນການຊຳລະຕ່າງປະເທດ (ມີທັງໝົດ 2 ຕົວຊີ້ບອກ ແລະ ຄາດວ່າຈະສາມາດບັນລຸໄດ້ຕາມແຜນທັງ 2 ຕົວຊີ້ບອກ): ໃນໄລຍະ 9 ເດືອນ ດຸນການຄ້າຕ່າງປະເທດສືບຕໍ່ເກີນດຸນ ປະມານ 911 ລ້ານໂດລາ ແລະ ຄາດວ່າໝົດປີຈະເກີນດຸນປະມານ 1.199 ລ້ານໂດລາ, ແຕ່ການນຳເຂົ້າເງິນຕາ ທີ່ຜ່ານລະບົບທະນາຄານ ແມ່ນຍັງບໍ່ສູງ (ປະມານ 33% ຂອງມູນຄ່າສິ່ງອອກ). ສຳລັບກະແສນຳເຂົ້າທຶນຈາກການລົງທຶນຂອງຕ່າງປະເທດ ຜ່ານລະບົບທະນາຄານໃນໄລຍະ 9 ເດືອນ ມີມູນຄ່າພຽງ 2.599,32 ຕື້ກີບ ເທົ່າກັບ 167,69 ລ້ານໂດລາ ແລະ ສ່ວນໜຶ່ງແມ່ນທຶນໃນຮູບແບບວັດຖຸ, ພ້ອມກັນນັ້ນ, ຖານະເງິນຕາຕ່າງປະເທດຂອງລະບົບທະນາຄານຍັງບໍ່ທັນເຂັ້ມແຂງ ເຖິງວ່າລະດັບຄັງສຳຮອງເງິນຕາຕ່າງປະເທດ ກຸ້ມການນຳເຂົ້າບໍ່ຫລຸດ 3 ເດືອນ.

4). ການລົງທຶນທົ່ວສັງຄົມ (ມີທັງໝົດ 5 ຕົວຊີ້ບອກ ແລະ ຄາດວ່າຈະສາມາດບັນລຸໄດ້ຕາມແຜນມີ 4 ຕົວຊີ້ບອກ): ອັນທີ່ພົ້ນເດັ່ນແມ່ນ ເຖິງຈະມີຄວາມຫຍຸ້ງຍາກດ້ານຕ່າງໆ, ແຕ່ການລົງທຶນທົ່ວສັງຄົມກໍຍັງມີຄວາມຟົດຟື້ນດີ ສາມາດປະຕິບັດໄດ້ 46.893,35 ຕື້ກີບ ເທົ່າກັບ 106,7% ຂອງແຜນການ (43.950 ຕື້ກີບ); ໃນນີ້, ການລົງທຶນຈາກງົບປະມານລັດ ໄດ້ອະນຸມັດກວດຜ່ານເບີກຈ່າຍຈາກຂະແໜງແຜນການ ຈຳນວນ 3.515 ຕື້ກີບ ເທົ່າກັບ 89% ຂອງແຜນການ ແລະ ເບີກຈ່າຍຕົວຈິງຜ່ານກະຊວງການເງິນ ຈຳນວນ 2.086 ຕື້ກີບ ເທົ່າກັບ 53% ຂອງແຜນການ (ແຜນການ: 3.956 ກີບ), ການຊ່ວຍເຫລືອທາງການເພື່ອການພັດທະນາ ປະຕິບັດໄດ້ 6.255,96 ຕື້ກີບ ເທົ່າກັບ 92,7% ຂອງແຜນການ (ແຜນການ: 6750 ຕື້ກີບ) ແລະ ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດໄດ້ມີທຶນນຳເຂົ້າຕົວຈິງທັງໝົດ 37,122,39 ຕື້ກີບ ເທົ່າກັບ 126,2% ຂອງແຜນການ (ແຜນການ: 29.420 ຕື້ກີບ).

2. ເປົ້າໝາຍການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບສູງຂຶ້ນສາມາດຕອບສະໜອງຄວາມຕ້ອງການຂອງການພັດທະນາ

1). ວຽກງານການສຶກສາ ແລະ ກິລາ (ມີທັງໝົດ 15 ຕົວຊີ້ບອກ): ມີ 07 ຕົວຊີ້ບອກທີ່ສາມາດບັນລຸໄດ້ຕາມແຜນ ແລະ ມີ 18 ຕົວຊີ້ບອກມີຄວາມສ່ຽງທີ່ຈະບໍ່ບັນລຸໄດ້, ໃນນີ້ສິ່ງທີ່ໜ້າເປັນຫ່ວງແມ່ນການປະລະການຮຽນໃນຊັ້ນປະຖົມ, ມັດທະຍົມຕົ້ນ ແລະ ປາຍ; ອັດຕາການເລື່ອນຊັ້ນໃນແຕ່ລະດັບເຫັນວ່າຫລຸດລົງ; ໂຮງຮຽນອາຊີວະສຶກສາ ແລະ ໂຮງຮຽນຢູ່ເຂດຊົນນະບົດບາງບ່ອນຂາດຄູສອນ.

2). ວຽກງານສາທາລະນະສຸກ (ມີທັງໝົດ 11 ຕົວຊີ້ບອກ): ມີ 7 ຕົວຊີ້ບອກຄາດວ່າຈະບັນລຸຕາມແຜນ, ໃນນີ້ອັນທີ່ພົ້ນເດັ່ນແມ່ນ ການສັກວັກຊີນປ້ອງກັນພະຍາດໂຄວິດ-19 ໃນເຂັມທີ 1 ກວມເອົາ 80,8% ຂອງປະຊາກອນທັງໝົດ ແລະ ເຂັມທີ 2 ກວມເອົາ 72%, ເຂັມທີ 3 ກວມເອົາ 25,7% ແລະ ເຂັມທີ 4 ກວມເອົາ 3,9% ແລະ ຄາດວ່າໝົດປີ ເຂັມທີ 1 ຈະບັນລຸໄດ້ 86,5% ແລະ ເຂັມທີ 2 ກວມເອົາ 77%, ເຂັ້ມທີ 3 ກວມເອົາ 31,8% ແລະ ເຂັມທີ 4 ກວມເອົາ 7,4%, ເຖິງຢ່າງໃດກໍຕາມ ມີ 4 ຕົວຊີ້ບອກແມ່ນມີຄວາມທ້າທາຍທີ່ຈະບໍ່ບັນລຸຕາມແຜນ ເປັນຕົ້ນແມ່ນ: ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະ

ອ່ານຕໍ່ສະບັບໜ້າ...

# ຫລາຍບັນຫາທີ່ ສສຊ ຕັ້ງຂຶ້ນໃນວາລະກອງປະຊຸມສະໄໝສາມັນ ເທື່ອທີ 3

ເພື່ອເປັນການເບິ່ງຫວນຄືນບັນດາຄຳເຫັນຂອງທ່ານສະມາຊິກສະພາແຫ່ງຊາດ (ສສຊ) ທີ່ໄດ້ມີຄຳເຫັນໃນວາລະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ໃນນັ້ນ, ເມື່ອວັນທີ 13 ມິຖຸນາ 2022 ທ່ານ ສາຍທອງ ໄຊຍະວົງ ສສຊ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ໄດ້ມີຄຳເຫັນຕໍ່ບົດລາຍງານຂອງລັດຖະບານ ໂດຍທ່ານໄດ້ສະແດງຄວາມເປັນເອກະພາບຕໍ່ກັບການລາຍງານຂອງນາຍົກລັດຖະມົນຕີ, ຕໍ່ກັບການລາຍງານຂອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ກໍຄືທະນາຄານແຫ່ງ ສປປລາວ ແລະ ທ່ານໄດ້ມີຄຳເຫັນແລກປ່ຽນວ່າ: ບັນຫາທີໜຶ່ງ ກ່ຽວກັບວຽກງານການລົງທຶນ ກໍຄືການຈັດສັນແຜນເຫັນວ່າຢູ່ໃນປີຕໍ່ໄປການຈັດສັນແຜນງົບປະມານ ສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງໄດ້ຄົ້ນຄວ້າຈັດສັນງົບປະມານໃຫ້ທັນກັບກຳນົດເວລາທີ່ກົດໝາຍກຳນົດໄວ້ ໃນໄລຍະທີ່ຜ່ານມາ ປີ 2021 ງົບປະມານແມ່ນເດືອນມິຖຸນາ ຈຶ່ງອະນຸມັດອອກມາ, ປີ 2022 ແມ່ນເດືອນພຶດສະພາ ຈຶ່ງສາມາດອະນຸມັດອອກມາໄດ້ ສະນັ້ນ, ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດໂຄງການ ຖືວ່າເຂົ້າສູ່ລະດູຝົນ ແລະ ມີຄວາມຫຍຸ້ງຍາກ ຢູ່ໃນການຈັດຕັ້ງປະຕິບັດ.

ບັນຫາທີສອງ ຂໍແລກປ່ຽນເລື່ອງອັດຕາແລກປ່ຽນ ຫລື ການອ່ອນຄ່າຂອງເງິນກີບ ພວກເຮົາກໍເຂົ້າໃຈວ່າ ມັນຂຶ້ນກັບຫລາຍປັດໄຈ ທັງພາຍນອກ ແລະ ພາຍໃນ ທັງເງິນໂດລາ ທັງໃນການຜະລິດສິນຄ້າພາຍໃນ ຫລື ວ່າການຄຸ້ມຄອງດ້ານກົດໝາຍທີ່ທະນາຄານໄດ້ລາຍງານໄປ ເຫັນວ່າຄວາມເຂັ້ມງວດໃນການປະຕິບັດກົດໝາຍນີ້ ບໍ່ສາມາດຈັດຕັ້ງປະຕິບັດໄດ້ດີ ສະນັ້ນ, ເຖິງວ່າກົດໝາຍພວກເຮົາຈະອອກໃນກອງປະຊຸມສະໄໝສາມັນເທື່ອທີ 3 ນີ້ ຖ້າພວກເຮົາບໍ່ສາມາດຈັດຕັ້ງປະຕິບັດກົດໝາຍ ກໍບໍ່ສາມາດເຮັດໃຫ້ບັນຫາດັ່ງກ່າວນີ້ລຸລ່ວງໄປໄດ້ ເພາະວ່າສະພາບປັດຈຸບັນເຫັນວ່າເຖິງເວລາແລ້ວທີ່ຈະໄດ້ພ້ອມເຮັດວຽກຮ່ວມກັນ ບັນຫາທຳອິດກໍຄືການຖືຄອງເງິນຕາຕ່າງປະເທດຂອງແຕ່ລະພາກສ່ວນ ອັນທີສອງບັນຫາການຊື້-ຂາຍສິນຄ້າໃນໄລຍະຜ່ານມາ ກໍຄືປັດຈຸບັນນີ້ ຍັງຊື້ຂາຍກັນເປັນເງິນຕາຕ່າງປະເທດ ຍັງມີຫລາຍຮ້ານ ເຊັ່ນການຊື້-ຂາຍພາຫະນະຕ່າງໆ ແມ່ນຊື້ຂາຍເປັນເງິນຕາຕ່າງປະເທດ ແລະ ບັນຫາຂອງສິນຄ້າທີ່ສົ່ງອອກ-ນຳເຂົ້າ ໂຕນີ້ແມ່ນບັນຫາໜັກຂອງພວກເຮົາທີ່ຈັດຕັ້ງປະຕິບັດມາດົນແລ້ວ ແຕ່ຍັງທັນບໍ່ສາມາດຈັດຕັ້ງປະຕິບັດໄດ້ ແລະ ຍັງບໍ່ມີມາດຕະການທີ່ເຂັ້ມງວດ.

ຕໍ່ບັນຫາການຄຸ້ມຄອງເງິນຕາຕ່າງປະເທດນີ້ ຖ້າພວກເຮົາຫາກບໍ່ພ້ອມກັນເຂັ້ມງວດ ແມ່ນພວກເຮົາຍັງຈະປະສົບບັນຫາ ເພາະວ່າການປະຕິບັດກົດໝາຍບໍ່ເຂັ້ມງວດ ແຕ່ຂັ້ນຕອນຢູ່ການກວດກາ, ຂັ້ນຕອນໃນການປະສານງານ, ຂັ້ນຕອນໃນການສົມທົບກັນລະຫວ່າງຂະແໜງການທີ່ກ່ຽວຂ້ອງ ເພື່ອໃຫ້ບັນລຸຄາດໝາຍ ເຫັນວ່າຍັງບໍ່ທັນເຮັດໄດ້ ມີແຕ່ປະຕິບັດມາດຕະການຕ່າງໆ ແຕ່ວ່າຍັງບໍ່ໄດ້ມີມາດຕະການຕິດຕາມ, ບໍ່ໄດ້ກວດກາຜົນຂອງມັນເທົ່າທີ່ຄວນ.

ທ່ານ ສາຍທອງ ໄຊຍະວົງ ໄດ້ໃຫ້ຮູ້ວ່າ: ບັນຫາໂຄງການຍົກຍ້າຍພົນລະເມືອງຢູ່ໃນແຂວງຈຳປາສັກ ທີ່ມາຈາກພາກເໜືອ ເຊິ່ງມີຈຳນວນຫລາຍສົມຄວນ ໂດຍມາຮອດໄລຍະກອງປະຊຸມສະໄໝສາມັນເທື່ອທີ 3 ມີຢູ່ຈຳນວນ 192 ຄອບຄົວ ມີ 925 ຄົນ ຍິງ 473 ຄົນ ໂດຍໄດ້ຍ້າຍມາຢູ່ຂອບເຂດເມືອງປາກຊ່ອງ ແຂວງຈຳປາສັກ. ການປົກຄອງແຂວງ, ຂະແໜງການທີ່ກ່ຽວຂ້ອງໄດ້ມີການປຸກລະດົມຂົນຂວາຍໃຫ້ກັບຄືນຖິ່ນຖານ ເພາະວ່າເຂົາເຈົ້າມາບໍ່ຖືກຕ້ອງຕາມກົດໝາຍ, ບໍ່ມີເອກະສານ ມີແຕ່ໃບສຳມະໂນຄົວ ບາງທ່ານກໍບໍ່ມີເອກະສານຫຍັງເລີຍ ມາຮອດເດືອນທີຫ້າກໍຍັງມີການເຄື່ອນຍ້າຍມາຢູ່ ຈຳນວນ 14 ຄອບຄົວ ມີ 36 ຄົນ ສະນັ້ນ, ບັນຫານີ້ໄດ້ສ້າງຄວາມສັບສົນຢູ່ໃນຈຸດດັ່ງກ່າວ ເກີດມີການຄ້າຂາຍຢາບ້າ, ປາກົດການຫຍໍ້ທໍ້ຕ່າງໆຂຶ້ນຕາມທີ່ຂະແໜງການທີ່ກ່ຽວຂ້ອງໄດ້ປະຕິບັດໜ້າທີ່ ແລະ ພົບບັນຫາດັ່ງກ່າວ ສະນັ້ນ, ແຂວງຈຳປາສັກ ຈຶ່ງຢາກສະເໜີໃຫ້ລັດຖະບານໄດ້ຊ່ວຍຫາວິທີແກ້ໄຂຕໍ່ບັນຫາດັ່ງກ່າວ ເພື່ອຫາທາງອອກໃນເມື່ອມີການເຄື່ອນຍ້າຍຖືກຕ້ອງຕາມກົດໝາຍກໍຍິນດີຮັບເອົາ ຈຶ່ງຢາກຂໍສະເໜີໃຫ້ລັດຖະບານຊ່ວຍ.

ນອກນັ້ນ, ກ່ຽວກັບການຂົນສົ່ງສິນຄ້າພືດຜັກ ໂດຍສະເພາະແມ່ນສິນຄ້າກະສິກຳ ທີ່ຈະເຄື່ອນຍ້າຍຈາກແຂວງຈຳປາສັກ ກໍຄືພາກໃຕ້ຂອງລາວ ມາສູ່ນະຄອນຫລວງວຽງຈັນ ກໍຄືຕ່າງແຂວງ, ບັນຫາທີ່ກະທົບ ກໍຄືຕົ້ນທຶນຂອງການຂົນສົ່ງສູງ ສະນັ້ນ, ສະເໜີວ່າຖ້າລັດຖະບານຊ່ວຍຖ້າສາມາດຫລຸດຜ່ອນອາກອນຕາມເສັ້ນທາງຕ່າງໆ ໃຫ້ໜ້ອຍລົງ ແລະ ບໍ່ໃຫ້ມີການເກັບຕາມທາງເພີ່ມ ເພາະວ່າເວົ້າງ່າຍໆຕາມທັດສະນະຂອງຂ້າພະເຈົ້າຢາກສະເໜີວ່າ ສະເພາະສິນຄ້າກະສິກຳຄວນມີກົລະນີພິເສດ ເພື່ອໃຫ້ສິນຄ້າດັ່ງກ່າວໄປໄດ້ທຸກຈຸດ ແລະ ສາມາດຂາຍໄດ້ໃນລາຄາທີ່ເໝາະສົມ ເພາະໃນປັດຈຸບັນນີ້ ບັນດາສິນຄ້າກະສິກຳທີ່ມາສູ່ນະຄອນຫລວງວຽງຈັນ ມີຄວາມຫຍຸ້ງຍາກ ແລະ ບໍ່ສາມາດແຂ່ງຂັນທາງດ້ານລາຄາໄດ້.

ບັນຫາສຸດທ້າຍຢາກສະເໜີກ່ຽວກັບບັນຫາເລື່ອງການຈັດສັນທີ່ດິນໃຫ້ແກ່ປະຊາຊົນບາງບ້ານຂອງແຂວງຈຳປາສັກ ຜ່ານການເຄື່ອນໄຫວຕົວຈິງ ແລະ ໄດ້ຮັບການສະເໜີຂອງປະຊາຊົນບາງບ້ານນີ້ ເຊິ່ງມີບາງບ້ານໄດ້ກໍ່ຕັ້ງກ່ອນປ່າສະຫງວນແຫ່ງຊາດ, ຕັ້ງເປັນບ້ານມາແຕ່ດົນແລ້ວ ແຕ່ວ່າປະກາດເປັນປ່າສະຫງວນແຫ່ງຊາດ ປະຊາຊົນກໍຍັງດຳລົງຊີວິດຢູ່ເຂດດັ່ງກ່າວ ສະນັ້ນ, ໃນເມື່ອປະຊາຊົນຂາດດິນທຳມາຫາກິນປູກຝັງ ສະເໜີໃຫ້ລັດຖະບານໄດ້ຊ່ວຍແກ້ໄຂບັນຫາທີ່ທຳການຜະລິດຂອງປະຊາຊົນຢູ່ໃນຈຸດດັ່ງກ່າວ ເຊິ່ງແມ່ນປະຊາຊົນບ້ານຫ້ວຍຕ້ອງ ເມືອງປະທຸມພອນ ແຂວງຈຳປາສັກ ທີ່ກໍ່ຕັ້ງກ່ອນປ່າສະຫງວນແຫ່ງຊາດ ເຊິ່ງການປົກຄອງແຂວງຈຳປາສັກຍັງບໍ່ສາມາດແກ້ໄຂໄດ້ ເນື່ອງຈາກພົວພັນກັບກົດໝາຍກ່ຽວຂ້ອງ.

## ສະຫລຸບຂໍ້ແຂ່ງຂັນ 5 ເປັນເຈົ້າປະຈຳປີ 2022




(ສພຊ) ຕອນບ່າຍຂອງວັນພະຫັດທີ 1 ທັນວາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ ໄດ້ຈັດພິທີສະຫລຸບຂໍ້ແຂ່ງຂັນ 5 ເປັນເຈົ້າປະຈຳປີ 2022 ຂອງກຳມະບານຮາກຖານສະພາປະຊາຊົນແຂວງອຸດົມໄຊ ໂດຍການເປັນປະທານຂອງສະຫາຍ ນາງ ຄຳພອນ ພິມມະຈັນ ຄະນະບໍລິຫານງານສະຫະພັນກຳມະບານແຂວງ, ຮອງປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມພິທີມີສະຫາຍ ສົມສັກ ຄຳລ້ານ ຄະນະບໍລິຫານງານສະຫະພັນກຳມະບານແຂວງ, ຮອງປະທານສະຫະພັນກຳມະບານແຂວງ, ສະຫາຍ ທອງຄານ ວັດສະດາກອນ ເລຂາໜ່ວຍພັກ, ປະທານຄະນະກຳມະການ ຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງ, ແຂກເຊີນ, ຄະນະກຳມະບານ ແລະ ສະມາຊິກກຳມະບານພາຍໃນຮາກຖານສະພາປະຊາຊົນແຂວງເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ໄດ້ຮັບຟັງການຜ່ານຂໍ້ຕົກລົງຂອງສະຫະພັນກຳມະບານແຂວງ ວ່າດ້ວຍການອະນຸມັດຈັດພິທີສະຫລຸບຂໍ້ແຂ່ງຂັນ 5 ເປັນເຈົ້າປະຈຳປີ 2022, ບົດສະຫລຸບຂໍ້ແຂ່ງຂັນ 5 ເປັນເຈົ້າປະຈຳປີ 2022 ທິດທາງແຜນການປະຈຳປີ 2023 ເຊິ່ງຕະຫລອດໄລຍະ 1 ປີຜ່ານມາ, ສະມາຊິກກຳມະບານຮາກຖານສະພາປະຊາຊົນແຂວງ ເປັນເຈົ້າການເຝິກຝົນຫລໍ່ຫລອມຕົນເອງໃຫ້ມີທັດສະນະການເມືອງໜັກແໜ້ນ, ມີຫລັກໝັ້ນຊົນຊັ້ນກຳມະກອນ, ມີຄວາມຈົ່ງຮັກພັກດີຕໍ່ຊາດຕໍ່ປະຊາຊົນ, ມີຄຸນສົມບັດສິນທຳປະຕິວັດ, ມີສະຕິເຄົາລົບຕໍ່ກົດໝາຍ, ລະບຽບການ ແລະ ມີທັດສະນະແຮງງານດີ; ເປັນເຈົ້າການປະຕິບັດລັດຖະທຳມະນູນ, ກົດໝາຍຂອງລັດ, ນິຕິກຳໃຕ້ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິກອງປະຊຸມສະພາປະຊາຊົນແຂວງ ແລະ ຮັບປະກັນການຈັດຕັ້ງປະຕິບັດ 3 ພາລະບົດບາດຂອງສະພາປະຊາຊົນແຂວງ; ເປັນເຈົ້າການໃນການພັດທະນາຕົນເອງໃຫ້ມີຄວາມຮູ້ຄວາມສາມາດທາງດ້ານທິດສະດີການເມືອງ, ວິຊາສະເພາະ, ມີເຕັກນິກວິທະຍາສາດ ແລະ ເຕັກໂນໂລຊີ ທີ່ທັນສະໄໝເຂົ້າໃນການເຮັດວຽກຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ; ເປັນເຈົ້າການພັດທະນາວຽກງານການຈັດຕັ້ງ, ໄດ້ມີຫົວຄິດປະດິດສ້າງໃນການຜັນຂະຫຍາຍແນວທາງຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ມະຕິກອງປະຊຸມສະໄໝສາມັນເທື່ອທີ 2-3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະພາປະຊາຊົນແຂວງ ຊຸດທີ II ມາເປັນແຜນການ, ແຜນງານ, ໂຄງການ, ກິດຈະກຳ ແລະ ຮູ້ນຳພາຈັດຕັ້ງ ຢ່າງມີປະສິດທິຜົນສູງ.

ຈາກນັ້ນ, ສະມາຊິກກຳມະບານຮາກຖານສະພາປະຊາຊົນແຂວງ ໄດ້ປະກອບຄຳຄິດຄຳເຫັນເພີ່ມເຕີມ ແລະ ໄດ້ຮັບຮອງເອົາບົດສະຫລຸບດັ່ງກ່າວຢ່າງເປັນທາງການ. ພ້ອມນັ້ນ, ໄດ້ຮັບຟັງການຜ່ານຂໍ້ຕົກລົງຂອງປະທານສະຫະພັນກຳມະບານແຂວງ ວ່າດ້ວຍການມອບໃບຍັ້ງຢືນ 5 ເປັນເຈົ້າປະຈຳປີ 2022 ໃຫ້ແກ່ກຳມະບານຮາກຖານສະພາປະຊາຊົນແຂວງ, ຂໍ້ຕົກລົງຂອງສະຫະພັນກຳມະບານແຂວງ ວ່າດ້ວຍການຍ້ອງຍໍສະມາຊິກດີເດັ່ນ 2 ປີຊ້ອນ ແລະ ຜ່ານມະຕິຕົກລົງຂອງຄະນະພັກສະພາປະຊາຊົນ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຂໍ້ແຂ່ງຂັນ 5 ເປັນເຈົ້າຂອງກຳມະບານຮາກຖານສະພາປະຊາຊົນແຂວງ ແລະ ໄດ້ຈັດພິທີມອບ-ຮັບຢ່າງເປັນທາງການ.

ໂອກາດດັ່ງກ່າວ, ໄດ້ຮັບຟັງການໂອ້ລົມຈາກສະຫາຍສົມສັກ ຄຳລ້ານ ເຊິ່ງທ່ານໄດ້ເນັ້ນໜັກໃຫ້ສະມາຊິກກຳມະບານຮາກຖານສະພາປະຊາຊົນແຂວງ ເອົາໃຈໃສ່ໃນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າ, ສຶກສາອົບຮົມການເມືອງແນວຄິດໜັກແໜ້ນເຂັ້ມແຂງ, ຕັ້ງໜ້າເສີມຂະຫຍາຍຄວາມສາມັກຄີເປັນປຶກແຜ່ນພາຍໃນ, ມີຄວາມເປັນເອກະພາບກັນ ໃນການຈັດຕັ້ງປະຕິບັດວຽກງານ, ຕ້ອງພັດທະນາຕົນເອງ, ເປັນແບບຢ່າງທີ່ດີ, ຕ້ານ ແລະ ສະກັດກັນປາກົດການຫຍໍ້ທໍ້ໃນສັງຄົມ.

(ແສງພອນ ອິນນະລົງ)

## ສະຫລຸບບັ້ນຂໍ້ແຂ່ງຂັນ 3 ດີ ຂອງສະຫະພັນແມ່ຍິງ ປະຈຳປີ 2022




(ສພຊ) ຕອນເຊົ້າວັນພຸດທີ 30 ພະຈິກ 2022 ສະຫະພັນແມ່ຍິງໜ່ວຍສະພາປະຊາຊົນແຂວງອຸດົມໄຊ ໄດ້ຈັດພິທີສະຫລຸບບັ້ນຂໍ້ແຂ່ງຂັນ 3 ດີ ປະຈຳປີ 2022 ຢ່າງເປັນທາງການ ໂດຍການເປັນປະທານຂອງສະຫາຍ ນາງ ວຽງສະໄໝ ປັນຍາຂັນ ປະທານສະຫະພັນແມ່ຍິງໜ່ວຍສະພາປະຊາຊົນແຂວງອຸດົມໄຊ; ເຂົ້າຮ່ວມພິທີມີສະຫາຍ ປອ. ນາງ ວຽງມະລີ ສຸລິໄຊ ຮອງປະທານສະຫະພັນແມ່ຍິງແຂວງ, ສະຫາຍ ນາງ ວັນສີ ພວງມະໄລ ຮອງເລຂາໜ່ວຍພັກ, ສະຫາຍ ນາງ ຄຳພອນ ພິມມະຈັນ ຮອງປະທານສະພາປະຊາຊົນແຂວງ; ມີບັນດາສະຫາຍແຂກເຊີນມາຈາກໜ່ວຍແມ່ຍິງພະແນກການອ້ອມຂ້າງ ແລະ ສະມາຊິກແມ່ຍິງພາຍໃນໜ່ວຍສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ຄະນະຈັດຕັ້ງໄດ້ກ່າວຈຸດປະສົງ ແລະ ຜ່ານຂໍ້ຕົກລົງຂອງສະຫະພັນແມ່ຍິງແຂວງ ວ່າດ້ວຍການອະນຸມັດໃຫ້ສະຫະພັນແມ່ຍິງໜ່ວຍສະພາປະຊາຊົນແຂວງອຸດົມໄຊ ເປີດກອງປະຊຸມສະຫລຸບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ແລະ ໄດ້ຮັບຟັງການຜ່ານບົດສະຫລຸບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023 ຂອງສະຫະພັນແມ່ຍິງໜ່ວຍສະພາປະຊາຊົນແຂວງອຸດົມໄຊ; ຈາກນັ້ນ, ສະມາຊິກແມ່ຍິງພາຍໃນໜ່ວຍໄດ້ປະກອບຄຳຄິດຄຳເຫັນເພີ່ມເຕີມ ແລະ ໄດ້ຕົກລົງຮັບຮອງເອົາບົດສະຫລຸບດັ່ງກ່າວຢ່າງເປັນທາງການ. ພ້ອມນັ້ນ, ໄດ້ມີການຜ່ານຂໍ້ຕົກລົງວ່າດ້ວຍການມອບໃບຍັ້ງຢືນ 3 ດີ ປະຈຳປີ 2022 ໃຫ້ສະຫະພັນແມ່ຍິງໜ່ວຍສະພາປະຊາຊົນແຂວງອຸດົມໄຊ, ໃຫ້ບຸກຄົນ ແລະ ພິທີມອບ-ຮັບຢ່າງເປັນທາງການ.

ໂອກາດດັ່ງກ່າວ, ໄດ້ຮັບຟັງການໂອ້ລົມຈາກສະຫາຍ ປອ. ນາງ ວຽງມາລີ ສຸລິໄຊ ເຊິ່ງສະຫາຍໄດ້ເນັ້ນໜັກສະຫະພັນແມ່ຍິງໜ່ວຍສະພາປະຊາຊົນແຂວງ ເອົາໃຈໃສ່ໃນການສຶກສາອົບຮົມການເມືອງແນວຄິດໜັກແໜ້ນເຂັ້ມແຂງ, ຕັ້ງໜ້າເສີມຂະຫຍາຍຄວາມສາມັກຄີເປັນປຶກແຜ່ນພາຍໃນໜ່ວຍ, ມີຄວາມເປັນເອກະພາບກັນພາຍໃນຄະນະໜ່ວຍ ໃນການຈັດຕັ້ງປະຕິບັດວຽກງານຕ່າງໆ, ຕ້ອງພັດທະນາຕົນເອງ ແລະ ສືບຕໍ່ຈັດຕັ້ງປະຕິບັດເນື້ອໃນ 3 ດີໃຫ້ມີຄຸນນະພາບ, ເປັນແບບຢ່າງທີ່ດີ, ຕ້ານ ແລະ ສະກັດກັນປາກົດການຫຍໍ້ທໍ້ໃນສັງຄົມ ແລະ ອື່ນໆ. ພ້ອມນັ້ນ,ຕາງໜ້າຄະນະສະຫະພັນແມ່ຍິງໄດ້ຂຶ້ນຮັບຄຳໂອວາດ ເຊິ່ງທຸກຄຳເວົ້າຂອງສະຫາຍລ້ວນແຕ່ມີຄວາມໝາຍຄວາມສຳຄັນເປັນເຂັມຊີ້ທິດເຍືອງທາງ, ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານສະຫະພັນແມ່ຍິງໜ່ວຍສະພາປະຊາຊົນແຂວງ ໃຫ້ມີຜົນສຳເລັດ ແລະ ປາກົດຜົນເປັນຈິງ.

(ແສງພອນ ອິນນະລົງ)

# ກະກຽມບັນດາເນື້ອໃນທີ່ຈະນຳເຂົ້າພິຈາລະນາ, ຮັບຮອງໃນກອງປະຊຸມສະໄໝສາມັນ ເທື່ອທີ 4

(ສພຊ) ເພື່ອເຮັດໃຫ້ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ດຳເນີນໄປໃຫ້ຖືກຕ້ອງຕາມວາລະ ແລະ ມີເນື້ອໃນຄົບຖ້ວນ, ດັ່ງນັ້ນ ໃນຕອນເຊົ້າວັນທີ 30 ພະຈິກ 2022 ອົງການປົກຄອງແຂວງສະຫວັນນະເຂດຮ່ວມກັບສະພາປະຊາຊົນແຂວງ ແລະ ບັນດາພະແນກການຕ່າງໆອ້ອມຂ້າງແຂວງ ໄດ້ຈັດກອງປະຊຸມເພື່ອປຶກສາຫາລື ແລະ ກະກຽມເນື້ອໃນຕ່າງໆທີ່ຈະນຳເຂົ້າລາຍງານຕໍ່ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ຊຸດທີ II ໂດຍການເປັນປະທານຮ່ວມກັນຂອງທ່ານ ສັນຕິພາບ ພົມວິຫານ ເຈົ້າແຂວງແຂວງສະຫວັນນະເຂດ ແລະ ທ່ານ ກົງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງ, ມີກຳມະການປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ບັນດາປະທານ-ຮອງປະທານຄະນະກຳມະການ, ຄະນະພະແນກການ-ກົມກອງອ້ອມຂ້າງແຂວງ ແລະ ວິຊາການທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.




ທ່ານ ກົງແກ້ວ ມີວໍລະຈັກ ໄດ້ກ່າວຈຸດປະສົງຂອງກອງປະຊຸມໃນຄັ້ງນີ້ ພ້ອມທັງໄດ້ມີຄຳຖາມເຈາະຈີ້ມເພື່ອແນະນຳໃຫ້ບັນດາພະແນກການ, ອົງການທີ່ກ່ຽວຂ້ອງໄດ້ກະກຽມບັນດາເນື້ອໃນທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງສະຫວັນນະເຂດ ຊຸດທີ II ພ້ອມທັງປຶກສາຫາລືແລກປ່ຽນ ປະກອບຄຳຄິດ, ຄຳເຫັນເພື່ອເອກະພາບດ້ານເນື້ອໃນລະອຽດ ເຊັ່ນ ວຽກອົງການປົກຄອງແຂວງ ມີ 3 ເນື້ອໃນ: ພິຈາລະນາ ແລະ ຮັບຮອງເອົາບົດລາຍງານເຈົ້າແຂວງແຂວງສະຫວັນນະເຂດ ກ່ຽວກັບສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ຮັບຟັງການລາຍງານຈາກຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ ກ່ຽວກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ຮັບຟັງການລາຍງານຈາກຫົວໜ້າພະແນກການເງິນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ 2022, ທິດທາງແຜນການປະຈຳປີ 2023 ແລະ ການຄຸ້ມຄອງຊັບສິນລັດ ພາຍໃນແຂວງສະຫວັນນະເຂດ.

ວຽກອົງການກວດສອບປະຈຳພາກກາງ ແລະ ອົງການກວດກາລັດແຂວງ ມີ 2 ເນື້ອໃນ: ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງອົງການກວດສອບປະຈຳພາກກາງກ່ຽວກັບຜົນຂອງການກວດສອບຄືນ ແລະ ການສະຫລຸບງົບປະມານຂາດຕົວປະຈຳປີ 2021, ບົດສະຫລຸບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງອົງການກວດກາລັດແຂວງ ກ່ຽວກັບການຕິດຕາມກວດກາແກ້ໄຂຜົນການກວດສອບ ປີ 2021, ບົດສະຫລຸບການເຄື່ອນໄຫວວຽກງານກວດກາ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023.

ວຽກການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ມີ 3 ນິຕິກຳ: ພິຈາລະນາ, ຮັບຮອງເອົານິຕິກຳທີ່ສຳຄັນຂອງອົງການປົກຄອງແຂວງ ຄື: ຮ່າງຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງການຂົນສົ່ງທາງບົກພາຍໃນ ແຂວງສະຫວັນນະເຂດ (ພະແນກໂຍທາທິການ ແລະ ຂົນສົ່ງແຂວງ); ຮ່າງຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງຂີ້ເຫຍື້ອພາຍໃນແຂວງສະຫວັນນະເຂດ (ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ); ຮ່າງຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຕ້ານ ແລະ ສະກັດກັ້ນອັກຄີໄພພາຍໃນແຂວງສະຫວັນນະເຂດ (ກອງບັນຊາການ ປກສ ແຂວງ).

ວຽກອົງການໄອຍະການປະຊາຊົນແຂວງ ແລະ ສານປະຊາຊົນແຂວງ ມີ 2 ເນື້ອໃນ: ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງສານປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023.

ວຽກງານຂອງສະພາປະຊາຊົນແຂວງ ມີ 2 ເນື້ອໃນ: ພິຈາລະນາ ແລະ ຮັບຮອງເອົາການບົດລາຍງານຂອງສະພາປະຊາຊົນແຂວງ ຊຸດທີ II ກ່ຽວກັບການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023; ຮັບຟັງບົດປະກອບຄຳເຫັນຂອງອົງການແນວລາວສ້າງຊາດແຂວງ ກ່ຽວກັບການປະຕິບັດໜ້າທີ່ຂອງສະພາປະຊາຊົນແຂວງ. ແລະ ວຽກບຸກຄະລາກອນ: ພິຈາລະນາ, ຮັບຮອງບຸກຄະລາກອນຂອງອົງການໄອຍະການປະຊາຊົນແຂວງ.

ຫລັງຈາກນັ້ນ, ປະທານກອງປະຊຸມກໍໄດ້ສະຫລຸບ, ຕີລາຄາ ແລະ ມີທິດຊີ້ນຳ ພ້ອມທັງກຳນົດເອົາວັນທີ 24-27 ມັງກອນ 2023 ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ທີ່ຫໍວັດທະນະທຳ ໄກສອນພົມວິຫານ (ຄາດຄະເນ 4 ວັນ ຖ້ານິຕິກຳທັງ 3 ສະບັບ ນຳເຂົ້າພິຈາລະນາທັນຕາມກຳນົດເວລາ).

(ນັກຂ່າວ ສພຂ ສະຫວັນນະເຂດ)

# ກອງປະຊຸມຮ່ວມກັບອົງການປົກຄອງແຂວງ ແລະ ອົງການຕຸລາການແຂວງ



(ສພຊ) ວັນທີ 30 ພະຈິກ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຫົວພັນ, ຄະນະປະຈຳ ສພຂ ຫົວພັນ ຈັດກອງປະຊຸມຮ່ວມກັບອົງການປົກຄອງແຂວງ ແລະ ອົງການຕຸລາການ ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ພອນສຸກ ອິນທະວົງ ຄະນະປະຈຳພັກແຂວງ, ຮອງເຈົ້າແຂວງ ແຂວງຫົວພັນ ແລະ ທ່ານ ສົມສັກ ດອນຈານິດ ກຳມະການພັກແຂວງ, ຮອງປະທານ ສພຂ ຫົວພັນ; ມີບັນດາທ່ານຄະນະປະຈຳ ສພຂ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8, ສະມາຊິກສະພາປະຊາຊົນແຂວງ, ຄະນະເລຂາທິການ ສພຂ, ຫົວໜ້າ-ຮອງຫົວໜ້າພະແນກການອ້ອມຂ້າງແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ແລະ ວິຊາການຈາກຂະແໜງການທີ່ກ່ຽວຂ້ອງຂອງແຂວງເຂົ້າຮ່ວມ.

ກອງປະຊຸມ, ໄດ້ຮັບຟັງການຜ່ານຮ່າງບົດລາຍງານຂອງອົງການປົກຄອງແຂວງ ແລະ ອົງການຕຸລາການ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ປະຈຳປີ 2022 ແລະ ທິດທາງປະຈຳປີ 2023 ຂອງແຂວງຫົວພັນ; ຮ່າງບົດລາຍງານຜົນຂອງການກວດກາ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງອົງການກວດກາລັດແຂວງ; ຮ່າງບົດລາຍງານການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນແຂວງ; ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມ ກໍໄດ້ພ້ອມກັນຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ຕໍ່ກັບບັນດາຮ່າງບົດລາຍງານດັ່ງກ່າວ ເພື່ອໃຫ້ມີເນື້ອໃນລະອຽດຄົບຖ້ວນ, ສົມບູນ ແລະ ເພື່ອເປັນຂໍ້ມູນໃຫ້ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ນຳໄປຄົ້ນຄວ້າປະກອບຄຳຄິດເຫັນ ຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ແລະ ຈະໄດ້ນຳເຂົ້າຜ່ານ ຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງ ສພຂ ຫົວພັນ ຕື່ມອີກ.

ຕອນທ້າຍ, ຄະນະປະທານກອງປະຊຸມ ໄດ້ມີຄຳເຫັນຊີ້ນຳ ທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ອົງການປົກຄອງແຂວງ ແລະ ອົງການຕຸລາການທີ່ໄດ້ເອົາໃຈໃສ່ສະຫລຸບຕີລາຄາວຽກງານໃນຄວາມຮັບຜິດຊອບຂອງຕົນ ໃນໄລຍະໜຶ່ງປີຜ່ານມາ ເຊິ່ງສະແດງອອກໃນຮ່າງບົດລາຍງານ ເຫັນວ່າມີຫລາຍອັນພົ້ນເດັ່ນ, ແຕ່ກໍຕ້ອງໄດ້ເອົາໃຈໃສ່ສູ້ຊົນຕື່ມ ໂດຍສະເພາະ ແມ່ນການຈັດເກັບລາຍຮັບເຂົ້າງົບປະມານໃນທ້າຍປີ 2022 ໃຫ້ບັນລຸຕາມແຜນການວາງໄວ້, ພ້ອມນີ້ ທ່ານຍັງໄດ້ເນັ້ນໜັກຕື່ມ ດ້ານກົນໄກການປະສານງານ ລະຫວ່າງ ສພຂ ກັບອົງການປົກຄອງແຂວງ, ອົງການຕຸລາການ ແລະ ຂະແໜງການກ່ຽວຂ້ອງ ໃຫ້ມີຄວາມເປັນເອກະພາບ, ຄ່ອງຕົວ ແລະ ທັນຕາມກຳນົດເວລາທີ່ກົດໝາຍກຳນົດ.

(ເວີນ ແກ້ວບຸນມີ)

# ປະທານສະພາປະຊາຊົນແຂວງ ຢ້ຽມຢາມດ່ານປະເພນີບ້ານແດນວິໄລ



(ສພຊ) ໃນອາທິດຜ່ານມານີ້, ທ່ານ ກົງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງສະຫວັນນະເຂດ ພ້ອມຄະນະ ໄດ້ເຄື່ອນໄຫວຢ້ຽມຢາມດ່ານປະເພນີ 9/2 ບ້ານແດນວິໄລ ໂດຍການຕ້ອນຮັບຂອງທ່ານ ລຳແກ້ວ ແສງໜູທອງ ເຈົ້າເມືອງ ເມືອງນອງ ພ້ອມສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງນອງ ພ້ອມດ້ວຍເຈົ້າໜ້າທີ່ປ້ອງກັນຄວາມສະຫງົບປະຈຳດ່ານ ແລະ ຄະນະກອງຮ້ອຍທະຫານຊາຍແດນ 322 ເຂົ້າຮ່ວມ.

ໂອກາດນີ້, ໄດ້ຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ເຊິ່ງໃຫ້ຮູ້ວ່າ: ດ່ານປະເພນີ 9/2 ແດນວິໄລ ເປັນອີກດ່ານໜຶ່ງ ທີ່ຢູ່ພາຍໃຕ້ການຊີ້ນຳ-ນຳພາຂອງກອງບັນຊາການ ປກສ ເມືອງນອງ ຕັ້ງຫ່າງຈາກເທສະບານເມືອງໄປ ທາງທິດຕາເວັນຕົກປະມານ 40 ກິໂລແມັດ ແລະ ມີຊາຍແດນຕິດຈອດໃນແຕ່ລະດ້ານຄື: ທິດເໜືອຕິດກັບບ້ານຈຽງ ເມືອງເຊໂປນ, ທິດໃຕ້ຕິດກັບບ້ານປະລຽງເກົ່າ ເມືອງນອງ, ທິດຕາເວັນອອກຕິດກັບບ້ານຕານົວເມືອງເຮືອງຮວ້າ ແຂວງກວາງຈິ ສສ.ຫວຽດນາມ, ທິດຕາເວັນຕົກຕິດກັບບ້ານຕາກອຍ ເມືອງນອງ, ພາຍໃນດ່ານມີພະນັກງານທັງໝົດ 6 ສະຫາຍ, ດ້ານການຈັດຕັ້ງວຽກງານຜ່ານມາ ໄດ້ອອກໜັງສືຜ່ານແດນຊົ່ວຄາວໃຫ້ພົນລະເມືອງທີ່ເປັນເມືອງເຊິ່ງໜ້າສາມາດໄປໄດ້ 1 ຄັ້ງກຳນົດ 7 ວັນ, ສ່ວນປະຊາຊົນເບື້ອງຫວຽດນາມ ແມ່ນເຈົ້າໜ້າທີ່ເບື້ອງຫວຽດນາມ ອອກປຶ້ມຜ່ານແດນໃຫ້ສຳລັບເມືອງເຊິ່ງໜ້າ ສາມາດໄປໄດ້ 1 ຄັ້ງ, ກຳນົດ 15 ວັນ, ໄດ້ປະສານສົມທົບແລກປ່ຽນບົດຮຽນເຊິ່ງກັນແລະກັນ ແລະ ໄດ້ມີການສ່ອງແສງການພົວພັນວຽກງານຊາຍແດນ ລະຫວ່າງສອງດ່ານລາວຫວຽດນາມ ໂດຍຜັດປ່ຽນກັນເປັນເຈົ້າພາບ ແລະ ໄດ້ກວດກາເວນຍາມຄວາມບໍ່ສະຫງົບລຽບຕາມຊາຍແດນບ້ານແຮກສ່ຽວ ເພື່ອໃຫ້ມີຄວາມເປັນລະບຽບຮຽບຮ້ອຍພາຍໃນ, ປັດຈຸບັນດ່ານປະເພນີ 9/2 ລາວ ແລະ ປ້ອມສະແຫັມ ສສ.ຫວຽດນາມແມ່ນປິດໃຫ້ບໍລິການ ພາຍຫລັງມີການລະບາດຂອງພະຍາດໂຄວິດ-19.

ຈາກນັ້ນ, ໃນພິທີກໍໄດ້ມີການຊັກຖາມຕໍ່ກັບການຈັດຕັ້ງປະຕິບັດວຽກງານຜ່ານມາ ໂດຍສະເພາະວຽກງານ ລຽບຕາມຊາຍແດນ ເພື່ອເກັບກຳຂໍ້ມູນຕ່າງໆທີ່ເຫັນວ່າຍັງບໍ່ສອດຄ່ອງ ພ້ອມທັງປັບປຸງລະບົບການຈັດຕັ້ງພາຍໃນດ່ານໃຫ້ຖືກຕ້ອງ ແລະ ເໝາະສົມກັບສະພາບຄວາມເປັນຈິງ.

ໂອກາດດັ່ງກ່າວ, ປະທານສະພາປະຊາຊົນແຂວງ ກໍໄດ້ເດີນທາງເຄື່ອນໄຫວຕິດຕາມຊຸກຍູ້ການສ້າງຂົວໄມ້ໄລ່ຂ້າມເຊລະນອງ ເຊິ່ງເປັນປະເພນີຂອງປະຊາຊົນທີ່ເຄີຍສືບທອດປະຕິບັດກັນມາ ພໍຕົກຮອດລະດູແລ້ງປະຊາຊົນທີ່ຢູ່ ພາກເຊລະນອງຈະໄດ້ສາມັກຄີກັນສ້າງຂົວໄມ້ໄລ່ຂຶ້ນມາໃນທຸກໆປີ ພາຍຫລັງນ້ຳໄດ້ພັດເອົາຂົວດັ່ງກ່າວໃນໄລຍະລະດູຝົນ, ຂົວ ມີຄວາມກວ້າງ 3 ແມັດ, ຍາວ 265 ແມັດ, ໃຊ້ແຮງງານຈຳນວນ 168 ຄົນຈາກ 4 ບ້ານ ຄື: ບ້ານອາລ້ອງ, ບ້ານປໍ່, ບ້ານວົງ ແລະ ບ້ານສະວື. ພາຍຫລັງທີ່ໄດ້ເຄື່ອນໄຫວເບິ່ງພື້ນທີ່ຕົວຈິງທ່ານ ກົງແກ້ວ ມີວໍລະຈັກ ຍັງໄດ້ປະກອບສ່ວນທຶນຮອນຊ່ວຍຊຸກຍູ້ພໍ່ແມ່ປະຊາຊົນສ້າງຂົວເຊລະນອງ ເປັນເງິນ 3 ລ້ານກີບ ແລະ ພະນັກງານກະສິກຳດ່ານບ້ານດົງ ປະກອບອີກ 1 ລ້ານກີບ.



# ປະທານໄກສອນພົມວິຫານ ຈະຢືນຍົງຢູ່ໃນໃຈຂອງພວກເຮົາຕະຫລອດໄປ

108 ສາລະ

**ໂດຍ: ດອກຫຍ້າ**

ວັນທີ 13 ທັນວາ ເປັນວັນຄົບຮອບວັນເກີດຂອງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ເຄົາລົບຮັກຂອງປວງຊົນລາວທັງຊາດ ແລະ ໃນປີນີ້ ກໍໄດ້ຫມູນວຽນມາບັນຈົບ ຄົບຮອບ 102 ປີ (13 ທັນວາ 1920-13 ທັນວາ 2022) ຕະຫລອດຊີວິດຂອງເພິ່ນ ແມ່ນໄດ້ອຸທິດໃຫ້ແກ່ປະເທດຊາດ ແລະ ປະຊາຊົນ, ທ່ານເຮັດວຽກຢ່າງບໍ່ຮູ້ອິດເມື່ອຍ ໃນພາລະກິດກອບກູ້ ເພື່ອປົດປ່ອຍປະເທດຊາດ ນຳເອົາຄວາມເປັນເອກະລາດ, ອິດສະຫລະພາບ ແລະ ຜືນແຜ່ນດິນອັນຄົບຖ້ວນ ມາໃຫ້ແກ່ປວງຊົນລາວໄດ້ຢ່າງມີໄຊ ແລະ ສະຖາປານາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975 ຢ່າງສະຫງ່າຜ່າເຜີຍ ແລະ ສືບຕໍ່ນຳພາປວງຊົນລາວທັງຊາດ ປະຕິບັດພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດສູ່ຈຸດໝາຍສັງຄົມນິຍົມ ດ້ວຍທ່າກ້າວທີ່ໜັກແໜ້ນ ແລະ ມີຜົນສຳເລັດຢ່າງຕໍ່ເນື່ອງ.



ປະທານ ໄກສອນ ພົມວິຫານ ແມ່ນລູກຮັກຫລານແພງ ຂອງປະຊາຊົນລາວບັນດາເຜົ່າ ເປັນບຸກຄົນທີ່ຮັກຊາດ ເປັນນັກປະຕິວັດຜູ້ຍິ່ງໃຫຍ່ຂອງຊາດ ເປັນວິລະບູລຸດ, ເປັນຜູ້ນຳທີ່ປີຊາສາມາດ, ສະຫລາດສ່ອງໃສ ແລະ ສະດຸ້ງໄວ; ທ່ານເປັນທັງນັກທິດສະດີ ແລະ ພຶດຕິກຳທີ່ດີ ສາມາດຂົນຂວາຍໂຄສະນາ, ປາຖະກະຖາດີເລີດ ເປັນນັກຍຸດທະສາດ, ອອກແບບນະໂຍບາຍ ແລະ ວິທີປະຕິບັດທີ່ສະຫລາດຄ່ອງແຄ້ວ; ປະທານ ໄກສອນ ພົມວິຫານ ເປັນສັນຍາລັກ ແລະ ແກ່ນສານຂອງຄວາມສາມັກຄີພາຍໃນພັກ ແລະ ໃນຊາດ ເຊິ່ງຍາມໃດທ່ານກໍເອົາໃຈໃສ່ສ້າງ ແລະ ເພີ່ມທະວີຄວາມສາມັກຄີປອງດອງລະຫວ່າງເຜົ່າ, ຄວາມເປັນປຶກແຜ່ນພາຍໃນຊາດ ແລະ ຄວາມເປັນເອກະພາບພາຍໃນພັກ.

ປະທານ ໄກສອນ ພົມວິຫານ ເປັນຜູ້ນຳທີ່ມີຄຸນສົມບັດສິນທຳປະຕິວັດອັນສູງສົ່ງ, ມີທັດສະນະມະຫາຊົນກວ້າງຂວາງ, ເປັນຜູ້ນຳທີ່ດຸໝັ່ນ, ດຳລົງຊີວິດແບບງ່າຍດາຍ, ປະຢັດ ແລະ ບໍລິສຸດປອດໃສຂາວສະອາດ; ເປັນນັກເຄື່ອນໄຫວສາກົນທີ່ດີເດັ່ນ, ເປັນຜູ້ວາງແຜນແນວທາງ ແລະ ເປັນແບບຢ່າງປະຕິບັດແນວທາງການຕ່າງປະເທດຢ່າງຖືກຕ້ອງ ເຮັດໃຫ້ ສປປລາວ ມີບົດບາດໃນເວທີສາກົນນັບມື້ສູງເດັ່ນ.

ໃນສະພາບຄວາມຮຽກຮ້ອງຕ້ອງການໃໝ່, ພວກເຮົາຕ້ອງຕັ້ງຫນ້າຮໍ່າຮຽນ ແລະ ສືບທອດມໍລະດົກອັນລ້ຳຄ່າຂອງປະທານ ໄກສອນ ພົມວິຫານ ທີ່ໄດ້ສ້າງໄວ້ດ້ວຍການຕັ້ງໜ້າສືບຕໍ່ສ້າງບົດບາດ ກ້າວບຸກທະລຸທາງດ້ານຈິນຕະນາການຢ່າງແຂງແຮງ ດ້ວຍການສັງລວມເອົາທັດສະນະແນວຄິດ, ຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດຂອງປະທານ ໄກສອນ ພົມວິຫານ ມາເປັນແບບຢ່າງໃນການເຝິກຝົນຫລໍ່ຫລອມຕົນເອງ ໃຫ້ເປັນສະມາຊິກພັກ, ພະນັກງານທີ່ດີເດັ່ນ ເປັນແບບຢ່າງນຳໜ້າ ໃນພາລະກິດປະຕິວັດໃນໄລຍະໃໝ່ໃຫ້ບັນລຸຜົນ ຕາມລະດັບຄາດໝາຍທີ່ວາງໄວ້; ພ້ອມກັນເດັດດ່ຽວຍຶດໝັ້ນ ໃນການກ້າວເດີ່ນສູ່ຈຸດໝາຍສັງຄົມນິຍົມຢ່າງໜັກແໜ້ນ ປະຕິບັດສອງໜ້າທີ່ຍຸດທະສາດ ຄື ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ; ຍຶດໝັ້ນການສ້າງພັກ-ພະນັກງານ ເພື່ອເພີ່ມທະວີຄວາມສາມາດກຳອຳນາດ, ລັກສະນະເປັນແບບຢ່າງນຳໜ້າ ແລະ ກຳລັງແຮງສູ້ຮົບຂອງພັກ ໃຫ້ສຳເລັດພາລະກິດປະຫວັດສາດ, ເພີ່ມທະວີຄວາມສັກສິດ ໃນການຄຸ້ມຄອງລັດຄຸ້ມຄອງສັງຄົມ ຕາມທິດພັກນຳພາ, ລັດຄຸ້ມຄອງດ້ວຍກົດໝາຍ ແລະ ປະຊາຊົນເປັນເຈົ້າ ເຂົ້າຮ່ວມເຮັດໃຫ້ສັງຄົມມີຄວາມສະຫງົບ, ສາມັກຄີເປັນແຜ່ນແໜ້ນ ແລະ ມີການພັດທະນາດ້ວຍຄວາມໜັກແໜ້ນຕໍ່ເນື່ອງ; ຕັ້ງໜ້າປະຕິບັດນະໂຍບາຍການຕ່າງປະເທດ ສັນຕິພາບ ເອກະລາດ ມິດຕະພາບ ແລະ ການຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ ໂດຍສະເພາະກັບບັນດາປະເທດເພື່ອນມິດຍຸດທະສາດ, ບັນດາປະເທດໃກ້ຄຽງ ກໍຄືບັນດາປະເທດອາຊຽນ, ອົງການຈັດຕັ້ງສາກົນ ແລະ ປະເທດເພື່ອນມິດທົ່ວໂລກ ເຊິ່ງແມ່ນຄວາມຈຳເປັນພາວະວິໄສ ເພື່ອສ້າງເປັນກຳລັງແຮງ ສັງລວມເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຂອງພວກເຮົາ.

## ສາລາກະວີ

## ຫວນຄືນ 2 ທັນວາ

**# ໂດຍ: ສາຍນ້ຳອູແດນງາມ**

❊ ກະວີກອນກາບກ້ານ
ແທນສຳນຽງວາຈາ
ເພື່ອໃຫ້ຫລານເຫລັນຫລ້າ
ວິລະກຳເລີດລ້ຳ

ທ່ານຜູ້ນຳເພິ່ນສ້າງ

ຂຽນສິ່ງພາສາ
ໝູ່ປະຊາຊາວເຊື້ອ
ອະນຸຊົນຮຽນຮໍ່າ
ເມືອງລາວໄດ້ຢູ່ເຢັນ ແທ້ນາ!

❊ ຊາດລາວເຮົາກ່ອນກີ້
ແບ່ງດິນລາວເປັນສອງ
ພາໃຫ້ເຮົາເສຍບ້ານ
ສູນເສຍລຸງແມ່ປ້າ

ສັດຕູຮຸກຮານແຊງ
ແມ່ຂອງຂວາງຂັ້ນ
ແດນດິນອາໄສຢູ່
ອາວອາພ້ອມໄຮ່ສວນ ນັ້ນແລ້ວ!

❊ ມວນສັດຕູໂຫດຮ້າຍ
ລະເບີດຍິນຂຶ້ນມາ
ນາສວນສາລີເຂົ້າ
ເຮືອນຊານລາມລຸກໄໝ້

ທຳລາຍຊາດເປັນແຜ
ຖອກເທເມືອງບ້ານ
ກາຍເປັນດິນເຖົ່າຖ່ານ
ເຫລືອໄວ້ແຕ່ຮອຍ ເສຍດາຍເດ!

❊ ພວກມັນມາເຂັ່ນຂ້າ
ຈິນບໍ່ມີຄຳໃດ
ຊາດລາວໃນຄາວນັ້ນ
ທົນກັບຄວາມປວດແຄ້ນ

ຮາວີຕໍ່ປະຊາຊົນ
ກ່າວບັນລະຍາຍໄດ້
ກາຍ-ໃຈໝອງໝົ່ນ
ຝັງແໜ້ນອົ່ງຊ່ວງ ນີ້ນາ!

❊ ຍ້ອນວ່າແພງຊາດເຊື້ອ
ຂັບໄລ່ສອງຝູງມານ
ເອົາອິດສະຫລະໃຫ້
ພາກພື້ນໂລກາເຫັນຮັບຮູ້

ວ່າຄົນລາວເກັ່ງກ້າ

ເລີຍຮ່ວມແຮງກັນ
ຍາດເອກະລາດໄວ້
ຊາວລາວຊົມຊື່ນ
ມິຍອມແພ້ແກ່ໃຜ ດອກນາ

❊ ເຖິງເວລາລ່ວງຍ້າຍ
ປະຫວັດສາດລາວມີ
ສອງສັດຕູມານຮ້າຍ
ໂຫດກຳເຫລືອແຜ່ນຟ້າ

ເລີຍຜ່ານນານປີ
ຈາລຶກຈຳຈິດໄວ້
ທຳລາຍແດນດິນແມ່
ຫາສັງລ້າງລຶບຫາຍ ເດີນໍ

❊ 2 ທັນວາ ເອກອ້າງ
ປວງປະຊາມີໄຊ
ສັດຕູກົ້ວເກງຢ້ານ
ເປັນເຫດການບອກແຈ້ງ

ສະແດງຄວາມຮັກຊາດໄວ້

ເຮືອງຮຸ່ງແສງສີ ທ່ານເອີຍ!
ພັກນຳພາສູ້
ໜີຕາຍຫລົ້ງທົບ
ຊາວລາວສູ້ບໍ່ຖອຍ ແທ້ໃດ!



ສຸກສະບາຍຫາຍໂຣຄາ

# ວິທີກຳຈັດກິ່ນເໝັນຂອງຕີນດ້ວຍໂຕເອງ

**ແປ ແລະ ຮຽບຮຽງໂດຍ: ເດັກຝຶກງານ**

**1. ແຊ່ຕີນໃນນ້ຳອຸ່ນປະສົມເກືອ**

ເປັນວິທີການທີ່ງ່າຍ ແລະ ໄດ້ຜົນດີ ພຽງແຕ່ກຽມນ້ຳອຸ່ນໃສ່ຊາມ ແລ້ວໃສ່ເກືອລົງໄປ ຈາກນັ້ນ, ເອົາຕີນລົງໄປແຊ່ປະມານ 15-20 ນາທີ, ເຮັດຕິດຕໍ່ກັນເປັນປະຈຳທຸກມື້ຕະຫລອດ 1 ເດືອນ, ກິ່ນເໝັນຂອງຕີນກໍຈະຫລຸດລົງ ຫລື ອາດຈະໝົດໄປເລີຍກໍໄດ້.

**2. ແຊ່ຕີນລົງໃນນ້ຳຢາເດັດຕອນ**

ນຳນ້ຳຢາເດັດຕອນ(Dettol) ກ່ອງສີສົ້ມ ມາປະສົມກັບນ້ຳແລ້ວເອົາຕີນລົງໄປແຊ່ ພ້ອມກັບຖູເຮັດຄວາມສະອາດ ໂດຍຈະເນັ້ນໄປທີ່ເລັບ ແລະ ງ່າມຕີນ ເພາະວ່າມັນມັກຈະເປັນບ່ອນທີ່ມີເຊື້ອແບັດທີເຣຍຫລາຍ ເຮັດແບບນີ້ທຸກໆມື້ກ່ອນນອນ ຈະຊ່ວຍໃຫ້ຕີນເຊົາເໝັນໄດ້ແນ່ນອນ.

**3. ແຊ່ໃນນ້ຳຢາບ້ວນປາກ**

ຖອກນ້ຳຢາບ້ວນປາກ 2 ຝາລົງໃສ່ນ້ຳທີ່ກຽມໄວ້ ຈາກນັ້ນ, ກໍແຊ່ຕີນລົງໄປນດົນຕາມຕ້ອງການ ເພາະໃນນ້ຳຢາບ້ວນປາກ ຈະມີສ່ວນປະສົມຂອງຢາທີ່ກຳຈັດເຊື້ອແບັດທີເລຍໄດ້ດີ ເຮັດເປັນປະຈຳ ກໍຈະຊ່ວຍຫລຸດບັນຫາກິ່ນເໝັນຂອງຕີນໄດ້;

**4. ຖູດ້ວຍຫີນສົ້ມ**

ເອົາຫີນສົ້ມມາຖູໃຫ້ທົ່ວຕີນ ເພາະຫີນສົ້ມສາມາດດັບກິ່ນໄດ້ດີ ທັງກິ່ນຕີນ ແລະ ກິ່ນໂຕ ແຕ່ຖ້າຫາກທາຫລາຍເກີນໄປກໍຈະເຮັດໃຫ້ຜິວບໍລິເວນທີ່ທານັ້ນແຕກໄດ້;

**5. ແກ້ບັນຫາທີ່ເກີບ ແລະ ຖົງຕີນ**

ຊັກເກີບ ແລະ ຖົງຕີນໃຫ້ສະອາດ ປ່ຽນພື້ນຮອງເກີບເລື້ອຍໆ ແລະ ບໍ່ຄວນໃສ່ຖົງຕີນຄູ່ເກົ່າຊ້ຳໆ;

**6. ໃຊ້ເບກກິ້ງໂຊດາ**

ເບກກິ້ງໂຊດາ ກໍຄືຜົງຟູທີ່ເຮົານຳມາປະກອບໃນການເຮັດເຂົ້າໜົມປັງ ລາຄາບໍ່ແພງຈັບຈ່າຍໄດ້ງ່າຍ ໂດຍນຳມາປະສົມໃສ່ນ້ຳໃຫ້ພໍດີຂຸ້ນ ແລ້ວທາໃຫ້ທົ່ວຕີນ, ໃຊ້ຝອຍຖູໃຫ້ທົ່ວຕີນແລ້ວລ້າງນ້ຳອອກ ເທົ່ານີ້ກິ່ນເໝັນກໍຈະໝົດໄປ.

**ແຫລ່ງຂໍ້ມູນ: www.tnews.co.th**



# ກົດໝາຍວ່າດ້ວຍການສຳຫລວດວັດແທກ ແລະ ສ້າງແຜນທີ່

**ຕໍ່ຈາກສະບັບກ່ອນ...**

**ມາດຕາ 84 ສິດ ແລະ ໜ້າທີ່ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບກັບຂະແໜງການພາຍໃນ ຕາມພາລະບົດບາດ ແລະ ຄວາມຮັບຜິດ ຊອບຂອງຕົນ ກ່ຽວກັບການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່.

**ໝວດທີ 2**
**ການກວດກາວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່**

**ມາດຕາ 85 ອົງການກວດກາ**

ອົງການກວດກາວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 80 ຂອງກົດໝາຍສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ.

**ມາດຕາ 86 ເນື້ອໃນການກວດກາ**

ການກວດກາວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
3. ການເຄື່ອນໄຫວວຽກງານ ແລະ ການດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ລວມທັງການເຄື່ອນໄຫວຂອງຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່;
4. ການແກ້ໄຂຄຳສະເໜີຂອງພາກສ່ວນທີ່ກ່ຽວຂ້ອງກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່.

**ມາດຕາ 87 ຮູບການການກວດກາ**

ການກວດກາວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມແຜນການປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປົກກະຕິ ແລະ ມີກຳນົດເວລາທີ່ແນ່ນອນ;
2. ການກວດການອກແຜນການ ຊຶ່ງແມ່ນ ການກວດກາເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ການກວດກາວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

**ພາກທີ IX**
**ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ**

**ມາດຕາ 88 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການປະຕິບັດວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢ່າງມີປະສິດທິພາບ ແລະ ປະສິດທິຜົນຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 89 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

**ມາດຕາ 90 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ໂດຍເຈດຕະນາ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝ ດັ່ງນີ້:

1. ດຳເນີນທຸລະກິດກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ໂດຍບໍ່ໄດ້ຮັບອະນຸຍາດຈະຖືກປັບໃໝ 9.000.000 ກີບ ຕໍ່ຄັ້ງ;
2. ໃຫ້ຜູ້ອື່ນນຳໃຊ້ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຈະຖືກປັບໃໝ 4.500.000 ກີບ ຕໍ່ຄັ້ງ;
3. ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບ ໃໝ 3.000.000 ກີບ ຕໍ່ຄັ້ງ;
4. ໃຫ້ຜູ້ອື່ນນຳໃຊ້ໃບອະນຸຍາດປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຈະຖືກປັບໃໝ 1.500.000 ກີບ ຕໍ່ຄັ້ງ;
5. ນຳເຂົ້າ-ສົ່ງອອກເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ຢັ້ງຢືນຄວາມຖືກຕ້ອງທາງດ້ານເຕັກນິກ ຈະຖືກປັບໃໝສາມສ່ວນຮ້ອຍ (3%) ຂອງມູນຄ່າເຄື່ອງມືດັ່ງກ່າວ;
6. ສຳເນົາຖ່າຍ ແລະ ຈັດພິມ ຂໍ້ມູນກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 400.000 ຫາ 2.000.000 ກີບ ຕໍ່ຄັ້ງ;
7. ນຳເຂົ້າ-ສົ່ງອອກ, ສະໜອງ ຫຼື ນຳໃຊ້ ຂໍ້ມູນ, ຜະລິດຕະພັນ ການສຳຫຼວດວັດແທກ ແລະ ສ້າງແຜນທີ່ ໂດຍບໍ່ໄດ້ຮັບອະນຸຍາດຈະຖືກປັບໃໝ 250.000 ກີບ ຕໍ່ຄັ້ງ.

**ພາກທີ X**
**ບົດບັນຍັດສຸດທ້າຍ**

**ມາດຕາ 91 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍ ສະບັບນີ້.

**ມາດຕາ 92 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ ປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

**ກອງປະຊຸມ...**

ມາທິການຂອງສະພາແຫ່ງຊາດ, ກຳມະການຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບ, ບັນດາທ່ານຮອງລັດຖະມົນຕີ, ຜູ້ຕາງໜ້າຈາກຂະແໜງການ ແລະ ແຂກຖືກເຊີນ.

ໃນວາລະເປີດກອງປະຊຸມ, ທ່ານ ປອ. ລີເບີ ລີບົວປາວ ໄດ້ກ່າວວ່າ: ການຈັດກອງປະຊຸມຄົບຄະນະຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບ ຄັ້ງນີ້ ແມ່ນປະຕິບັດຕາມທີ່ກຳນົດໄວ້ໃນມາດຕາ 73 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ; ກອງປະຊຸມຄົບຄະນະຂອງກຳມາທິການຈະໄດ້ພ້ອມກັນຄົ້ນຄວ້າ ພິຈາລະນາບັນຫາຕ່າງໆກ່ຽວກັບການເຄື່ອນໄຫວວຽກງານຂອງກຳມາທິການ ແລະ ຄົ້ນຄວ້າປະກອບຄຳເຫັນໃສ່ເອກະສານທີ່ສຳຄັນຕ່າງໆ ທີ່ກຳມາທິການຮັບຜິດຊອບ ແລະ ຄົ້ນຄວ້າເນື້ອໃນບັນຫາທີ່ຈະບັນຈຸເຂົ້າໃນວາລະກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX; ສ່ວນຫົວຂໍ້ເນື້ອໃນທີ່ພາກສ່ວນກ່ຽວຂ້ອງຂອງລັດຖະບານ ທີ່ຈະນຳມາລາຍງານໃນກອງປະຊຸມຄົບຄະນະຄັ້ງນີ້ ລ້ວນແຕ່ຕິດພັນກັບບັນຫາສຳຄັນທີ່ໄດ້ຍົກຂຶ້ນໃນກອງປະຊຸມຮ່ວມ ລະຫວ່າງຄະນະປະຈຳ ແລະ ຄະນະລັດຖະບານ ເປັນຕົ້ນ ການຈັດຕັ້ງປະຕິບັດວາລະແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ທ່ານຍັງໃຫ້ຮູ້ວ່າ: ກອງປະຊຸມຄັ້ງນີ້ ດຳເນີນໄປເປັນເວລາ 1 ວັນ ແຕ່ເນື້ອໃນທີ່ສະເໜີໃຫ້ຄົ້ນຄວ້າຕົກລົງແມ່ນມີຫລາຍບັນຫາ ເປັນຕົ້ນແມ່ນຈະໄດ້ສະເໜີຜ່ານການສ້າງປຶ້ມຄູ່ມືຂອງກຳມາທິການ ຈຳນວນ 2 ຫົວ ກ່ຽວກັບການພິຈາລະນາຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ, ຫົວທີ 2 ການຕິດຕາມກວດກາ ການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ພ້ອມກັນນັ້ນ ກໍຈະໄດ້ຮັບຟັງການລາຍງານ ບັນຫາສຳຄັນຂອງຊາດ ທີ່ລັດຖະບານໄດ້ຈັດຕັ້ງປະຕິບັດຜ່ານມາ ຕາມມະຕິຂອງສະພາແຫ່ງຊາດ ເຊິ່ງຈະລາຍງານໂດຍກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ທະນາຄານ ແຫ່ງ ສປປລາວ, ອົງການກວດສອບແຫ່ງລັດ, ອົງການກວດກາລັດ ນອກຈາກນີ້ ຍັງຈະໄດ້ຮັບຟັງການສະເໜີ ກ່ຽວກັບຮ່າງກົດໝາຍວ່າດ້ວຍກວດສອບແຫ່ງລັດ ແລະ ກົດໝາຍວ່າດ້ວຍກວດກາລັດ ເພື່ອໃຫ້ມີເວລາຄົ້ນຄິດຊ່ວຍປະກອບຄຳເຫັນເພື່ອຫາວິທີການແກ້ໄຂບັນຫາຮ່ວມກັນ ເພື່ອໃຫ້ໄດ້ຮັບຜົນສຳເລັດຕາມແຜນການ; ດັ່ງນັ້ນ, ຮຽກຮ້ອງມາຍັງບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ຈຶ່ງໄດ້ສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າ ສົນທະນາ ແລກປ່ຽນຄຳຄິດຄຳເຫັນ ໃຫ້ເລິກເຊິ່ງ ແລະ ກວ້າງຂວາງ ເພື່ອຊອກໃຫ້ເຫັນສາເຫດທີ່ເກີດຂຶ້ນຕົວຈິງ ທັງດ້ານດີ ແລະ ຂໍ້ຄົງຄ້າງ ເພື່ອຄົ້ນຄວ້ານຳສະເໜີວິທີແກ້ໄຂ ໃຫ້ສາມາດປະຕິບັດໄດ້ໃນສະເພາະໜ້າ ແລະ ຍາວນານ ເພື່ອຮັບປະກັນໃຫ້ແກ່ການລົງທຶນພັດທະນາທີ່ຍືນຍົງ ແລະ ຄວາມມີສະຖຽນລະພາບທາງດ້ານການເງິນ ໃຫ້ໝັ້ນຄົງ ແລະ ເຊື່ອໝັ້ນວ່າ ກອງປະຊຸມຄັ້ງນີ້ ຈະຊ່ວຍໃຫ້ບັນດາທ່ານໄດ້ແລກປ່ຽນຄວາມຄິດຄວາມເຫັນໃນເບື້ອງຕົ້ນກ່ຽວກັບການສ້າງນິຕິກຳ ໃນຂົງເຂດແຜນການ ການເງິນ ແລະ ການກວດກາ, ສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດໃນແຕ່ລະປີ ເຊິ່ງແມ່ນບັນຫາທີ່ຕິດພັນກັບພາລະບົດບາດ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງກຳມາທິການແຜນການ, ການເງິນ ແລະ ກວດສອບ ເຊິ່ງຈະຕ້ອງໄດ້ຕີລາຄາສົມທຽບກັບການລົງຕິດຕາມກວດກາຕົວຈິງຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ຢູ່ບັນດາເຂດເລືອກຕັ້ງຂອງຕົນຜົນການສະແດງອອກທາງດ້ານຄວາມຄິດຄວາມເຫັນ ແລະ ການປະເມີນຕີລາຄາສະພາບບັນຫາດັ່ງກ່າວຈະເປັນປະໂຫຍດຢ່າງຫລວງຫລາຍໃນການເສີມຂະຫຍາຍ ແລະ ເປີດກວ້າງແນວຄວາມຄິດທີ່ດີໃຫ້ສະມາຊິກກຳມາທິການຂອງສະພາແຫ່ງຊາດ, ພາກສ່ວນທີ່ກ່ຽວຂ້ອງຂອງລັດຖະບານ ເພື່ອເປັນການອຳນວຍຄວາມສະດວກໃນການປະສານງານ ລະຫວ່າງອົງການນິຕິບັນຍັດ ແລະ ອົງການບໍລິຫານ ຕໍ່ກັບການພົວພັນວຽກງານ ເພື່ອພ້ອມກັນປະຕິບັດໜ້າທີ່ບໍລິການປະຊາຊົນໃຫ້ມີຄຸນນະພາບ ແລະ ປະສິດທິຜົນກວ່າເກົ່າ. ຜ່ານຈາກກອງປະຊຸມນີ້ເຮັດໃຫ້ບັນດາທ່ານມີຄວາມຮັບຮູ້ເຂົ້າໃຈ ແລະ ໄດ້ຮັບຄວາມສະດວກຫລາຍຂຶ້ນ ໃນການສືບຕໍ່ປະຕິບັດໜ້າທີ່ຂອງທ່ານ ກໍຄືການສືບຕໍ່ສະໜັບສະໜູນວຽກງານຂອງສະພາແຫ່ງຊາດ ພິເສດແມ່ນວຽກງານຂອງ ກຳມາທິການແຜນການ, ການເງິນ ແລະ ການກວດສອບ ໃຫ້ກ້າວສູ່ຄຸນນະພາບທີ່ດີຂຶ້ນ ເພື່ອເປັນການ ປະກອບສ່ວນເຂົ້າໃນການຊຸກຍູ້ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ, ຮັບປະກັນໃຫ້ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດໄດ້ຮັບການຈັດຕັ້ງປະຕິບັດຕາມວິໄສທັດ, ຍຸດທະສາດ ແລະ ຂອບແຜນການຫ້າປີ ທີ່ສະພາແຫ່ງຊາດ ຊຸດທີ IX ໄດ້ຮັບຮອງເອົາ ເພື່ອນຳປະເທດຊາດ ຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ.

(ສອນສັກ ວັນວິໄຊ)




## ຄຸນສົມບັດສົມທຳປະຕິວັດ ຄືວຽກງານທີ່ບໍ່ສາມາດປະຖິ້ມໄດ້

**ໂດຍ: ດົ້ນກີບເມກ**

ທ່ານ ພູມີ ວົງວິຈິດ ໄດ້ຂຽນໄວ້ໃນປຶ້ມຄຸນສົມບັດໃໝ່ ແລະ ສົນທຳປະຕິວັດ ໜ້າ 154 ວ່າ: ຄຸນສົມບັດໃໝ່ຂອງພວກເຮົາ ປຸກລະດົມໃຫ້ມີຈິດໃຈ ເພື່ອນມິດອັນໃສແຈ້ງ... ພ້ອມນີ້ ກໍຕ້ອງຕຳນິຈຳແນກຢ່າງເຄັ່ງຂຶມຕໍ່ຜູ້ທີ່ເຮັດໃຫ້ແນວຄິດ ເພື່ອນມິດກາຍເປັນການພົວພັນດ້ວຍເງິນຄຳ ຫລື ດົ້ດ້ານປົກປິດເອົາກັນ, ເຕົ້າໂຮມກັນມ້າງເພຜົນປະໂຫຍດຂອງສັງຄົມ, ສວຍໃຊ້ແນວຄິດເພື່ອນມິດເພື່ອເປັນໂອກາດຫາລ້ຳຫາລວຍ....

ເມື່ອວັນທີ 18 ພະຈິກ 2022 ທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ໄດ້ໃຫ້ກຽດໂອ້ລົມຕໍ່ກອງປະຊຸມວຽກງານການເມືອງ-ແນວຄິດທົ່ວປະເທດ ຄັ້ງທີ V ເຊິ່ງຜູ້ຂຽນຂໍນຳເອົາບາງຈຸດສະເໜີດັ່ງນີ້: ວຽກງານການເມືອງ-ແນວຄິດຖືເປັນສະໜາມຮົບອັນໜຶ່ງໃນວຽກງານຂອງພັກໄລຍະໃໝ່... ວຽກງານການເມືອງ-ແນວຄິດຄື: ສະໜາມຮົບການຕໍ່ສູ້ລະຫວ່າງອັນຖືກກັບອັນຜິດຢູ່ໃນກະໂຕສະມາຊິກພັກເຮົາ ເພື່ອໃຫ້ທຸກຄົນເອົາຊະນະແນວຄິດທີ່ບໍ່ຖືກຕ້ອງ... ແນ່ນອນບໍ່ປ່ອຍໃຫ້ແນວຄິດບໍ່ຖືກຕ້ອງ, ຜິດເຂວກືນກິນເນື້ອທີ່ ແລະ ຄອບງຳມັນສະໝອງ ຫລື ແນວຄິດຂອງສະມາຊິກພັກ ແລະ ປະຊາຊົນເຮົາເດັດຂາດ... ຢາກເຮັດໄດ້ຕ້ອງອີງໃສ່ສະມາຊິກພັກເຮົາແຕ່ເທິງລົງລຸ່ມຕ້ອງປະຕິບັດຄຳຂວັນທີ່ວ່າ: ເວົ້າຕ້ອງໄປຄຽງຄູ່ກັບການກະທຳ... ເຮັດໃຫ້ຄືກັບເວົ້າ, ການນຳພາທີ່ດີ ຄືການນຳພາທີ່ເປັນແບບຢ່າງ ໝາຍເຖິງຜູ້ນຳພາຕ້ອງເປັນແບບຢ່າງທີ່ດີ... ຜູ້ນຳພາຕ້ອງມີຄຸນນະທຳ, ມີວິໄສທັດ... ຮູ້ຄວາມປາຖະໜາຂອງປະຊາຊົນ..., ພັກເຮົາຕ້ອງໄດ້ແກ້ໄຂ ບັນດາບັນຫາທີ່ປະຊາຊົນ, ພະນັກງານຕັ້ງຂຶ້ນ ແລະ ປາຖະໜາຢາກໃຫ້ພັກເຮົາແກ້ໄຂໃນນັ້ນຄື:

1. ການສໍ້ລາດບັງຫລວງ;
2. ຄວາມບໍ່ດຸນດ່ຽງໃນການພັດທະນາ;
3. ຄວາມເຊື່ອມສົ້ມຂອງສັງຄົມ;
4. ການຂາດປະສິດທິພາບຂອງກົນຈັກ ບໍ່ໃຫ້ກົງຈັກແຂງກະດ້າງອາຍາສິດ, ແກ້ໄຂກົນໄກກວດກາຍາກ, ມີຊ່ອງຫວ່າງໃຫ້ຄົນສວຍໃຊ້ເຮັດສິ່ງຜິດໄດ້ງ່າຍ...

ສັງລວມຕາມຄຳເຫັນຂອງເພິ່ນຕໍ່ກອງປະຊຸມວຽກງານການເມືອງ-ແນວຄິດນັ້ນ ແມ່ນມີຈຸດທີ່ເນັ້ນແກ້ໄຂສະມາຊິກພັກ-ພະນັກງານທີ່ມີແນວຄິດບໍ່ຖືກຕ້ອງຕາມແນວທາງຂອງພັກ ສຳຄັນແມ່ນລະວັງພວກສວຍໃຊ້ໜ້າທີ່ຕຳແໜ່ງປະພຶດຕົນເປັນອາຍາສິດ...!




## ບໍ່ຍາກບໍ່ຊາ

\# ໂດຍ: ປ່າວກະບື

**ບຸນແຕ້ມ:** "ເວລາຢູ່ລອນດອນຫັ້ນ ໂຕມີບັນຫາຫຍຸ້ງຍາກກັບພາສາອັງກິດບໍ່?

**ໜູຊັບ:** "ເຮົາຫັ້ນບໍ່ຍາກ, ແຕ່ຄົນອັງກິດຕ່າງຫາກທີ່ຫຍຸ້ງຍາກ "

**ບຸນແຕ້ມ:** "ຍາກແນວໃດ?"

**ໜູຊັບ:** "ຍາກ! ກໍຍ້ອນວ່າ ພວກເຂົາເຂົ້າໃຈເຮົາຍາກ"

## HAVE NO DIFFICULTY

\# By: BAOKBU

**Boontaem:** "Did you have any difficulty with your English in London?"

**Noosah:** "No, but the English people did".

**Boontaem:** "What?"

**Noosab:** "Because it's difficult for them to understand me".

# WHO ປະເມີນປະຊາກອນໂລກ 90% ມີພູມຕ້ານທານພະຍາດໂຄວິດ-19 ແຕ່ເຕືອນໃຫ້ລະວັງສາຍພັນໃໝ່

ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ



ທ່ານ ທີໂດສ ອັດຮານອມ ກັບຣີເຢຊຸສ ຜູ້ອຳນວຍການໃຫຍ່ຂອງອົງການອະນາໄມໂລກ (WHO) ກ່າວວ່າ: ການເຝົ້າລະວັງທີ່ອ່ອນແອກຳລັງເປີດປະຕູໃຫ້ໄວຣັສສາຍພັນໃໝ່ປາກົດຂຶ້ນ ແລະ ເຂົ້າຄອບຄອງໂລກແທນໄວຣັສສາຍພັນໂອມິຄຣອນ.

ທ່ານໃຫ້ຮູ້ວ່າ: "WHO ຄາດຄະເນວ່າ: ປະຊາກອນໂລກຢ່າງໜ້ອຍ 90% ໃນປັດຈຸບັນມີພູມຕ້ານທານພະຍາດໂຄວິດ-19 ໃນລະດັບໜຶ່ງເນື່ອງຈາກການຕິດເຊື້ອ ຫລື ການສັກວັກຊີນ; ເຮົາໃກ້ຈະສາມາດເວົ້າໄດ້ວ່າ: ສະຖານະການສຸກເສີນຂອງພະຍາດລະບາດສິ້ນສຸດລົງແລ້ວ, ແຕ່ເຮົາຍັງໄປບໍ່ຮອດຈຸດນັ້ນ; ຊ່ອງວ່າງໃນການເຝົ້າລະວັງ, ການທົດລອງ, ການຈັດລຳດັບ ແລະ ການສັກວັກຊີນ ຍັງສ້າງເງື່ອນໄຂທີ່ສົມບູນແບບສຳລັບການເກີດຂຶ້ນຂອງໄວຣັສສາຍພັນໃໝ່ທີ່ໜ້າກັງວົນ ເຊິ່ງອາດເຮັດໃຫ້ເກີດການເສຍຊີວິດຈຳນວນຫລາຍ".

ທ່ານ ທີໂດສ ລະບຸວ່າ: ໃນທ້າຍອາທິດຜ່ານມາ ຖືເປັນການຄົບຮອບ 1 ປີທີ່ WHO ປະກາດໃຫ້ໄວຣັສໂຄວິດສາຍພັນໃໝ່ໂອມິຄຣອນເປັນໄວຣັສໂຄວິດ-19 ສາຍພັນໃໝ່ທີ່ໜ້າກັງວົນ ໂດຍສາຍພັນໂອມິຄຣອນໄດ້ແຜ່ໄດ້ຫລາຍກວ່າສາຍພັນເດລຕາ.

ໃນອາທິດຜ່ານມາ, ຜົນວິໄຈຫລ້າສຸດກ່ຽວກັບວັກຊີນໂຄວິດບູສເຕີທີ່ປັບປຸງໃໝ່ນັ້ນບົ່ງຊີ້ວ່າ: ວັກຊີນສູດໃໝ່ທີ່ພັດທະນາໂດຍໄຟເຊີ/ໄບອອນເທກ ແລະ ໂມເດີນາ ມີທ່າອ່ຽງຈະໃຫ້ການປົກປ້ອງທີ່ດີຂຶ້ນເມື່ອທຽບໃສ່ວັກຊີນລຸ້ນທຳອິດ.

ຜົນວິໄຈຈາກປະຊາຊົນຫລາຍກວ່າ 360.000 ຄົນບົ່ງຊີ້ວ່າ: ວັກຊີນບູສເຕີໄດ້ເພີ່ມການປົກປ້ອງໄວຣັສສາຍພັນໃໝ່ໃນປະຊາຊົນທີ່ໄດ້ຮັບວັກຊີນລຸ້ນເກົ່າມາກ່ອນ 4 ໂດສ.

ນັບແຕ່ເປີດຕົວວັກຊີນບູສເຕີລຸ້ນໃໝ່ໃນອາເມລິກາເດືອນກັນຍາ ເຊິ່ງເປັນວັກຊີນທີ່ສາມາດປ້ອງກັນໄວຣັສສາຍພັນດັ້ງເດີມ ແລະ ໄວຣັສໂອມິຄຣອນສາຍພັນ BA.4/5 ນັ້ນ ໃຫ້ຜົນໃນການປົກປ້ອງປະຊາຊົນໄວອາຍຸ 18-49 ປີໄດ້ດີກວ່າໃນປະຊາຊົນອາຍຸຫລາຍກວ່ານັ້ນ.

ທ່ານ ທີໂດສ ກ່າວວ່າ: ປັດຈຸບັນມີໄວຣັສໂອມິຄຣອນສາຍພັນຍ່ອຍຫລາຍກວ່າ 500 ສາຍພັນແຜ່ລະບາດ ເຊິ່ງທັງໝົດສາມາດຫລີກລ່ຽງພູມຕ້ານທານໄດ້ງ່າຍຂຶ້ນ ເຖິງວ່າມີທ່າອ່ຽງຮຸນແຮງນ້ອຍກວ່າໄວຣັສສາຍພັນກ່ອນໜ້າກໍຕາມ.

ທັງນີ້, WHO ໄດ້ຮັບລາຍງານຈຳນວນຜູ້ເສຍຊີວິດຈາກໂຄວິດ-19 ຈຳນວນ 6,6 ລ້ານຄົນທົ່ວໂລກ ຈາກຈຳນວນຜູ້ຕິດເຊື້ອເກືອບ 640 ລ້ານຄົນ, ແຕ່ WHO ລະບຸວ່າ: ນັ້ນເປັນຈຳນວນທີ່ໜ້ອຍກວ່າຄວາມເປັນຈິງຫລາຍ.

ທ່ານ ທີໂດສ ກ່າວວ່າ: "ປະຊາຊົນຫລາຍກວ່າ 8.500 ຄົນເສຍຊີວິດຈາກໂຄວິດໃນອາທິດຜ່ານມາ ເຊິ່ງເປັນສິ່ງທີ່ບໍ່ສາມາດຮັບໄດ້ຫລັງຈາກພະຍາດລະບາດດຳເນີນມາແລ້ວ 3 ປີ ໃນຂະນະທີ່ເຮົາມີເຄື່ອງມືຈຳນວນຫລາຍທີ່ຈະປ້ອງກັນການຕິດເຊື້ອ ແລະ ປິ່ນປົວຜູ້ຕິດເຊື້ອ".

**ແຫລ່ງຂ່າວ: LAOPATANA**

# ອົດສະຕຣາລີ ຜ່ານກົດໝາຍທີ່ເຂັ້ມງວດ ເພື່ອລົງໂທດຜູ້ລະເມີດຂໍ້ມູນສ່ວນບຸກຄົນ

ແປ ແລະ ຮຽບຮຽງ: ທະນາກອນ



ອີງຕາມການລາຍງານໃນອາທິດຜ່ານມາ ໃຫ້ຮູ້ວ່າ: ອົດສະຕຣາລີ ໄດ້ຜ່ານກົດໝາຍເພີ່ມການປັບໃໝ ກ່ຽວກັບການລະເມີດຂໍ້ມູນສ່ວນບຸກຄົນ ຈາກຄ່າປັບໃໝສູງສຸດ 2,2 ລ້ານໂດລາອົດສະຕຣາລີ ມາເປັນການປັບໃໝທີ່ບໍ່ມີເພດານ, ແຕ່ຈະຖືກຄິດໄລ່ຄວາມເສຍຫາຍ ຫລື ຂະໜາດຂອງອົງການທີ່ສູນເສຍຂໍ້ມູນແທນ ໂດຍການປັບໃໝໃນກໍລະນີຂອງຄວາມເສຍຫາຍຮ້າຍແຮງ ຫລື ການກະທຳຜິດຊໍ້າ ເຊິ່ງເພດານຄ່າປັບໃໝຈະຖືກເບິ່ງຈາກ 3 ເງື່ອນໄຂ ແລະ ຄິດໄລ່ເງື່ອນໄຂທີ່ເພດານປັບໃໝສູງສຸດ ປະກອບມີເງື່ອນໄຂຄື:

1. ມູນຄ່າ 50 ລ້ານໂດລາອົດສະຕຣາລີ;

2. ສາມເທົ່າຂອງມູນຄ່າຜົນປະໂຫຍດທີ່ຄົນບໍ່ດີໄດ້ຮັບຈາກການນຳໃຊ້ຂໍ້ມູນ;

3. 30% ຂອງເງິນໝູນວຽນຂອງບໍລິສັດ.

ອົດສະຕຣາລີ ໄດ້ປະສົບກັບການລະເມີດຂໍ້ມູນຄັ້ງໃຫຍ່ ຫລາຍຄັ້ງໃນປີນີ້ ເຊັ່ນ ເຄືອຂ່າຍໂທລະສັບມືຖື Optus ສູນເສຍຂໍ້ມູນລູກຄ້າ 9,8 ລ້ານຄົນ ຫລື ການບໍລິການປະກັນໄພສຸຂະພາບຂອງ Medibank ສູນເສຍລູກຄ້າ 9,7 ລ້ານຄົນ.

ນອກຈາກຈະເພີ່ມການລົງໂທດແລ້ວ ກົດໝາຍສະບັບນີ້ ຍັງໃຫ້ອຳນາດແກ່ກຳມະການຂໍ້ມູນສ່ວນບຸກຄົນ ສຳລັບການຊ່ວຍສອບສວນເຫດການລະເມີດຂໍ້ມູນ ແລະ ການເປີດເຜີຍຂໍ້ມູນເພື່ອປົກປ້ອງລູກຄ້າຂອງອົງການທີ່ຂໍ້ມູນຖືກລະເມີດ.

ກົດໝາຍດັ່ງກ່າວ ຖືເປັນບູລິມະສິດທີ່ຮີບດ່ວນຂອງລັດຖະບານທີ່ຫາກໍຂຶ້ນຮັບຕຳແໜ່ງໃນປີນີ້ ເຊິ່ງລັດຖະບານໄດ້ປະກາດວ່າຈະສືບຕໍ່ປັບປຸງກົດໝາຍຂໍ້ມູນສ່ວນບຸກຄົນຕື່ມອີກ.

**ແຫລ່ງຂໍ້ມູນ: Australia Attorney General**

ທະນາຄານພັດທະນາລາວ LDB Bank
ທະນາຄານພົງສະຫວັນ Phongsavanh BANK




| ຜູ້ຊີ້ນຳ | ຄະນະຊ່ຽວຊານທີ່ປຶກສາ | ຫົວໜ້າບັນນາທິການ | ກອງບັນນາທິການ | ອອກແບບຈັດໜ້າ |
|---|---|---|---|---|
| ທ່ານ ສິງຄຳ ວົງພະຈັນ | ທ່ານ ສີສຸພັນ ແສງສະຫວັນ<br>ທ່ານ ວິເສດ ສະແຫວງສຶກສາ<br>ທ່ານ ຄຳວິສັນ ແກ້ວສຸວັນ | ທ່ານ ປອ. ພົດສະໄໝ ບຸນວິໄລ<br>ທ່ານ ຂັນທະວີ ວົງພະຈັນ<br>ທ່ານ ເປຄຳ ລໍຄຳສອນ | ທ່ານ ນາງ ກົງໃຈ ແສງອຳພັນ<br>ທ່ານ ນາງ ສຸພາວັນ ຫອມສະນິດ<br>ທ່ານ ນາງ ປາກາລັກ ພົມມີໄຊ | ທ່ານ ນາງ ກຸກກິກ ບຸດດາໄຊ<br>ທ່ານ ສົມນຶກ ແກ້ວໄຊຍະຈັກ |